# ກຸ່ມຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ

Copyright © 2001 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຣຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒໐໐໐

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Division: Bernard M. Spooner

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 2&3
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2&3
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 4
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the Laotian Team
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, New Work Consultant, Multi-Ethnic, Baptist General Convention of Texas
Nelda P. Williams, Facilitators Coordinator, Consultant, Bible Study/Discipleship Division, Baptist General Convention of Texas

# ຄຳແນະນຳຄູສອນ
# ບົດຮຽນທີ 1
# ບໍ່ມີຫຍັງທຽບໄດ້

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຄາລາເຕັຽ 1:6-24
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ຄາລາເຕັຽ 1
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດໄດ້ນຳພຣະຄຸນອັນຍິ່ງໃຫຍ່ມະຫາສານມາໃນໂລກ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະອົງຈະບໍ່ຈິບຫາຍ.
ຄຳຖາມເພື່ອການສຳຣວດ: ພຣະຄຸນພຣະເຈົ້າຍິ່ງໃຫຍ່ແທ້ບໍ່? ໃຫຍ່ແນວໃດ? ມີຄວາມໝາຍອັນໃດສຳລັບຊີວິດປະຈຳວັນຂອງທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາທັງຫລາຍໄດ້ຮູ້ແລະມີຄວາມຈົ່ງຮັກພັກດີຕໍ່ພຣະຄຸນຂອງພຣະເຈົ້າ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

## ແຜນການສຳລັບການສອນ

1. ຂຽນໃສ່ກະດານ ຫລືຂຽນໃສ່ກະດາດ ດ້ວຍຄຳເວົ້າເຫລົ່ານີ້: 1. ຣະບຽບຣິດຄອງ, 2. ພຣະຄຸນ, 3. ຄວາມເຊື່ອ, ບອກນັກຮຽນວ່າສາມຢ່າງນີ້ແມ່ນເຮົາຈະເວົ້າກັນໃນວັນນີ້. ແລະຄຣູນຳພາການອ້ອນວອນເປີດ.

2. ແບ່ງນັກຮຽນເປັນສາມຈຸ ແລະໃຊ້ເວລາປະມານ 10 ຫລື 15 ນາທີເພື່ອຄົ້ນຄວ້າ.
   - ❑ ຈຸທີ 1 ໃຫ້ອ່ານ ຄາລາເຕັຽ 1:1-7 ແລະຄຣູເຮັດເຈັ້ຽຄຳຖາມດັ່ງນີ້ໃຫ້ຈຸທີ 1
     1. ຄຣິສຕຽນໃນແຂວງຄາລາເຕັຽມີບັນຫາເຣື່ອງໃດ?
     2. ໂປໂລແກ້ໄຂບັນຫາຂອງຄຣິສຕຽນໃນແຂວງຄາລາເຕັຽແນວໃດ?
     3. ໂປໂລເລີ້ມຕົ້ນຈົດໝາຍດ້ວຍຄຳເວົ້າແນວໃດ?
     4. ຄຳວ່າບໍ່ແມ່ນມະນຸດແຕ່ງຕັ້ງໂປໂລໝາຍຄວາມວ່າແນວໃດ?
   - ❑ ຈຸທີ 2 ໃຫ້ອ່ານ ຄາລາເຕັຽ 1:8-12 ແລະຄຣູເຮັດເຈັ້ຽຄຳຖາມດັ່ງນີ້ໃຫ້ຈຸທີ 2
     1. ໂປໂລມີລັກສະນະທ່າທີແນວໃດໃນເຣື່ອງຂ່າວປະເສີດ?
     2. ຄຣູສອນທີ່ບໍ່ຖືກຕ້ອງຕາມຄວາມຈິງເຣື່ອງພຣະຄັມພີໄດ້ແຜ່ເຖິງເຮົາເວລານີ້ແນວໃດ?
     3. ການສອນຜິດແນວນັ້ນມີຜົນສະທ້ອນແກ່ໂບດຕ່າງໆຢ່າງໃດແດ່?

4. ໂປໂລໄດ້ກ່າວວ່າຂ່າວປະເສີດທີ່ໂປໂລປະກາດເປັນຂ່າວປະເສີດປະເພດໃດ?

- ❑ ຈຸທີ 3 ໃຫ້ອ່ານ ຄາລາເຕັຽ 1:13-24 ແລະຄຣູເຮັດເຈັ້ຽຄຳຖາມດັ່ງນີ້ໃຫ້ຈຸທີ 3

1. ໂປໂລເລົ່າອັນໃດໃຫ້ຄຣິສຕຽນໃນແຂວງຄາລາເຕັຽຟັງ?
2. ໂປໂລມີໃຈໃນເຣື່ອງຂນົບທັມນຽມຢ່າງ?
3. ພຣະເຈົ້າໄດ້ເລືອກໂປໂລແຕ່ຍາມໃດ?
4. ຄຣິສຕຽນໃນແຂວງຢູດາຍຄຶດແນວໃດກັບໂປໂລເມື່ອຍັງບໍ່ຮູ້ຈັກກັບໂປໂລ ແລະຫລັງຈາກຮູ້ຈັກກັນແລ້ວພວກເຂົາເຈົ້າຄຶດແນວໃດກັບໂປໂລ?

3. ໃຫ້ແຕ່ລະຈຸລາຍງານສິ່ງທີ່ເຂົາເຈົ້າຄົ້ນຄວ້າ ປະມານ 5 ນາທີ.

4. ຖາມນັກຮຽນວ່າ ແມ່ນໃຜເປັນຜູ້ແຕ່ງຕັ້ງໂປໂລ ໃຫ້ເປັນສາວົກຂອງພຣະເຢຊູ? ຄຳຕອບຢູ່ໃນ ກິຈການ 9:15-16 (ເຣື່ອງທີ່ພຣະເຢຊູແຕ່ງຕັ້ງໂປໂລໃຫ້ເປັນສາວົກ).

5. ຈົດໝາຍສະບັບນີ້ໂປໂລໄດ້ຂຽນໄປຍັງຄຣິສຕຽນແຂວງຄາລາເຕັຽ ເປັນຫຍັງໂປໂລຈຶ່ງບໍ່ກ່າວຂອບພຣະຄຸນພຣະເຈົ້າ?

6. ດ້ວຍເຫດໃດຄຣິສຕຽນໃນແຂວງຄາລາເຕັຽຈຶ່ງຫລົງລືມພຣະເຈົ້າຢ່າງຮີບດ່ວນ?

7. ຄຣູອະທິບາຍ: ໂປໂລໄດ້ສອນຄຣິສຕຽນໃນແຂວງຄາເຕັຽເຖິງຄວາມລອດພົ້ນນັ້ນ ມາທາງພຣະຄຸນພຣະເຈົ້າ ຄືທ່ານ ທັງຫລາຍຕ້ອງວາງໃຈເຊື່ອໃນພຣະບຸດຂອງພຣະເຈົ້າເທົ່ານັ້ນທ່ານກໍຈະພົ້ນທັນທີ ທ່ານທັງຫລາຍບໍ່ຕ້ອງມີພິທີການອື່ນໃດອີກ. ບໍ່ນານຕໍ່ມາໄດ້ມີຄີສຕຽນຢິວມາສອນພວກເຂົາວ່າ ຄວາມເຊື່ອຂອງພວກທ່ານດີຢູ່ແລ້ວ ແຕ່ຖ້າພວກທ່ານຢາກໃຫ້ຄົບຖ້ວນແລະມີຄວາມໃກ້ຊິດກັບພຣະເຈົ້າທ່ານທັງຫລາຍ ຈຳຕ້ອງປະຕິບັດຕາມກົດບັນຍັດ, ເຂົ້າພິທີຕັດ ພ້ອມທັງນັບຖືກົດຣະບຽບແລະຮີດຄອງເກົ່າແກ່ອີກ ທ່ານທັງຫລາຍຈຶ່ງຈະກາຍເປັນຄົນບໍຣິສຸດ.

   ເຮົາຈະເຫັນວ່າ ສິ່ງທີ່ໂປໂລສອນແລະສິ່ງທີ່ຄຣິສຕຽນຢິວສອນມີຄວາມແຕກຕ່າງກັນເຊັ່ນວ່າພວກຄຣິສຕຽນຢິວເປັນຄົນຊາດຢິວ, ພວກເຂົາເຊື່ອວ່າການເທສນາຫລືການສອນຂອງຄິຣສຕຽນນັ້ນດີ, ແຕ່ສິ່ງທີ່ເຂົາບໍ່ເຊື່ອຄືເຂົາບໍ່ເຊື່ອວ່າຄວາມລອດພົ້ນມາທາງພຣະຄຸນທາງຄວາມເຊື່ອ, ເຂົາເຊື່ອວ່າຄວາມລອດພົ້ນຈະຕ້ອງມີມາໂດຍການປະຕິບັດບັນຍັດ, ຕ້ອງເຂົ້າພິທີຕັດ ຕລອດເຖິງຖືຮັກສາກົດບັນຍັດຂອງໂມເຊ ແລະປະຕິບັດຕາມຮີດຄອງອີກດ້ວຍ.

8. ເນື່ອງຈາກວ່າຄຣິສຕຽນທີ່ແຂວງຄາລາເຕັຽໄດ້ຫລົງເຊື່ອຂ່າວປະເສີດອື່ນໂປໂລຂໍໃຫ້ພຣະເຈົ້າເຮັດຫຍັງກັບເຂົາ? ແລະສິ່ງໂປໂລໄດ້ຂໍນຳພຣະຜູ້ເປັນເຈົ້ານັ້ນໝາຍຄວາມວ່າແນວໃດ? (ຂໍ້ 8).

9. ຄຣິສຕຽນລາວເຮົາບາງແຫ່ງ, ບາງຄົນຍັງເຮັດຄືຄຣິສຕຽນໃນແຂວງຄາລາເຕັຽແນວໃດແດ່?

10. ໂປໂລໄດ້ກ່າວໃນຂໍ້ 10 ວ່າ "ບັດນີ້ເຮົາກຳລັງຊອກຫາເອົາໃຈມະນຸດຫລື ຫລືວ່າຊອກໃຫ້ເປັນທີ່ຊອບພຣະທັຍພຣະ ເຈົ້າ" (1:10) ທ່ານເຂົ້າໃຈຢ່າງໃດ? ຫາກພໍໃຈມະນຸດແຕ່ຜິດຕໍ່ພຣະເຈົ້າ ຫລືຜິດໃຈມະນຸດແຕ່ຖືກພຣະທັຍພຣະ ເຈົ້າມີຄວາມແຕກຕ່າງກັນຢ່າງໃດ?

11. ດ້ວຍເຫດໃດໂປໂລຈຶ່ງເຫລົ່າຊີວິດການເປັນມາຂອງຕົນເອງໃຫ້ເຂົາໄດ້ຟັງ? (ຂໍ້ 13-17) <u>ປະຫວັດລະອຽດຂອງໂປໂລຢູ່ໃນ ກິຈການ 9:1-9.</u>

12. ໂປໂລໄດ້ອະທິບາຍເຣື່ອງຂ່າວປະເສີດແລະຜູ້ປະກາດຂ່າວປະເສີດນັ້ນແມ່ນອັນໃດສຳຄັນກວ່າກັນ?

13. ຂ່າວປະເສີດຂອງຄຣິສຕຽນຢິວໄດ້ປະກາດມີຄວາມ ແຕກຕ່າງກັບຂ່າວປະເສີດທີ່ໂປໂລປະກາດຢ່າງໃດ? ທ່ານມັກອັນໃດ?

14. ຄຣູນຳພາການອ້ອນວອນປິດ ແລະອ້ອນວອນເພື່ອນັກຮຽນທຸກຄົນບໍ່ໃຫ້ຫລົງຟັງຂ່າວປະເສີດອື່ນ.

# ຄຳແນະນຳຄູສອນ
# ບົດຮຽນທີ 2
# ປະຕິບັດຕາມຄຳສອນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຄາລາເຕັຽ 2:1-6,11-21
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ຄາລາເຕັຽ 2
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າເມື່ອເຮົາເຂົ້າໃຈໃນຂ່າວປະເສີດແລ້ວເຮົາຄວນເອົາມາປະຕິບັດ.
ຄຳຖາມເພື່ອການສຳຣວດ: ມີສິ່ງໃດແດ່ທີ່ເຮົາບໍ່ໄດ້ປະພຶດຕາມຫລັກຄຳສອນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາທັງຫລາຍໄດ້ຄົ້ນຫາວ່າສິ່ງໃດແດ່ທີ່ເຮົາບໍ່ໄດ້ປະຕິບັດໃນຊີວິດ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.
- ສ້າງຄອບຄົວໃຫ້ເຂັ້ມແຂງໃນຄວາມເຊື່ອໃນພຣະເຈົ້າ ແລະຮັບໃຊ້ໃນພຣະນາມແຫ່ງພຣະເຢຊູຄຣິດ

**ແຜນການສຳລັບການສອນ**

ການເປັນຄຣິສຕຽນບໍ່ແມ່ນຂອງງ່າຍໆ ຄົນລາວເຮົາ, ກ່ອນໜ້າຈະເປັນຄຣິສຕຽນໄດ້ກ່ອນອື່ນໝົດຈຳຕ້ອງຜ່ານຄວາມ ອາຍເສັຽກ່ອນ ເພາະຄົນລາວເຮົາມັກເປັນຄົນຖືກຣດວ່າຊັ້ນຕາມເຖົ້າແກ່ໂບຮານວ່າ. ຂ້າພະເຈົ້າຄິດເຖິງຕອນເປັນ ຄຣິສຕຽນໃໝ່ໆໄດ້ຍິນໝູ່ຮ້ອງວ່າລູກພຣະເຈົ້າກໍໜ້າອາຍ, ຕອນໄປໂບດກໍເຊື່ອງປຶ້ມພຣະຄັມພີໄວ້ໃນເສື້ອ. ຕໍ່ມາກໍບໍ່ອາຍອີກເມື່ອຫລາຍຄົນຮູ້ແລ້ວ. ສິ່ງຕໍ່ໄປທີ່ຂ້າພະເຈົ້າໄດ້ຮຽນຮູ້ກໍຄື ການເປັນຄິສຕຽນນີ້ຈຳຕ້ອງປະພຶດຕົວຕາມຄວາມເຊື່ອ ເພື່ອຄົນອື່ນຈະໄດ້ເຫັນພຣະເຢຊູໃນຕົວຂອງເຮົາ. ໃນບົດຮຽນນີ້ເຮົາຈະເຫັນໂປໂລເວົ້າຊ້ອງໜ້າເປໂຕທີ່ນັ່ງກິນແລະດື່ມກັບຄົນນອກສິນທັມເພື່ອຈະໃຫ້ຖືກໃຈເຂົາ.

1. ຂຽນຊື່ແຕ່ລະຄົນໃສ່ເຈັ້ຽແຂງຂະນາດນ້ອຍ ຫລືຂຽນໃສ່ກະດານ ດັ່ງນີ້: ໃຫ້ຂຽນຈັກສີ່ຫ້າຊື່ຜູ້ທີ່ມີຊື່ສຽງທີ່ຄົນຮູ້ດີ. ໃນຂະນະທີ່ເອົາຊື່ເພິ່ນມາຮຽງກັນແລ້ວຖາມນັກຮຽນວ່າ ໃນນີ້ແມ່ນຜູ້ໃດທີ່ທ່ານຄິດເຫັນເປັນຜູ້ທຳອິດ? ຂໍໃຫ້ຄົນນຶ່ງໄດ້ອະທິບາຍວ່າເປັນຫຍັງລາວຈຶ່ງຄິດເຖິງຜູ້ນີ້ເປັນຜູ້ທຳອິດ?

2. ຖາມນັກຮຽນ ຫາກທ່ານໃຫ້ຜູ້ອື່ນພິຈາຣະນາເບິ່ງທ່ານຄືທ່ານໄດ້ພົນລະນາທີ່ຜ່ານມາທ່ານຄິດວ່າຜູ້ອື່ນຈະພັນລະທ່ານແນວໃດ? (ຈຸປະສົງຄືເຮົາຢາກຮູ້ວ່າຜູ້ອື່ນຄິດວ່າເຮົາເປັນຄຣິສຕຽນແນວໃດ? ນີ້ແມ່ນການປະກາດຂ່າວປະເສີດໂດຍບໍ່ໄດ້ເວົ້າຫຍັງ ມີແຕ່ເຮັດໃຫ້ຄົນອື່ນເຫັນເທົ່ານັ້ນ)

3. ຂໍໃຫ້ຜູ້ນຶ່ງອ່ານ (໒:1-6) ແລະຖາມວ່າ ໂປໂລພາໃຜໄປຍັງກຸງເຢຣູຊາເລັມ? ການໄປຄັ້ງນີ້ມີຈຸດປະສົງແນວໃດ?

4. ເມື່ອຄົນຢິວເວົ້າເຖິງກົດບັນຍັດແມ່ນພວກເຂົາເຈົ້າເວົ້າເຖິງບັນຍັດອັນໃດ? ດ້ວຍເຫດໃດສາວົກອື່ນໆຈຶ່ງຍອມຮັບຮູ້ໂປໂລຮ່ວມເປັນກຸ່ມສາວົກໃນກຸງເຢຣູຊາເລັມ?

5. ຂໍໃຫ້ຜູ້ນຶ່ງອ່ານ (໒:11-14) ແລະຖາມ ເປັນຫຍັງໂປໂລຈຶ່ງຕໍ່ວ່າເປໂຕ? ອີກຊື່ນຶ່ງຂອງເປໂຕແມ່ນຫຍັງ ແລະມີຄວາມຫມາຍຢ່າງໃດ?

6. ເຣື່ອງທີ່ຄ້າຍຄືເປໂຕເຮັດໄດ້ລາມມາເຖິງເຮົາໃນເວລານີ້ຢ່າງໃດ?

໗. ຂໍໃຫ້ຜູ້ນຶ່ງອ່ານ (໒:15-16) ໂປໂລກ່າວວ່າ " ເຮົາໄດ້ຕາຍຈາກພຣະບັນຍັດແລ້ວທີ່ໄມ້ກາງແຂນ " ແມ່ນໂປໂລກໍາລັງເວົ້າເຖິງອັນໃດ?

8. ຄໍາວ່າ "ຕາຍຈາກຄວາມຜິດບາບ ແລະຕາຍໃນຄວາມຜິດບາບ" ມີຄວາມແຕກຕ່າງກັນແນວໃດ?

9. ດຽວນີ້ທ່ານທັງຫລາຍໄດ້ຕາຍໃນຄວາມຜິດບາບຫລືວ່າທ່ານທັງຫລາຍຕາຍຈາກຄວາມຜິດບາບ?

10. ຄຣູນໍາພາການອ້ອນວອນປິດ, ໃນນັ້ນໃຫ້ອ້ອນວອນເພື່ອສິ່ງທີ່ຮຽນຮູ້ແລ້ວໃຫ້ພາກັນເອົາໃຈໃສ່ປະຕິບັດທຸກວັນ ແລະອ້ອນວອນເພື່ອທຸກຄົນທີ່ຂຽນຊື່ໃນກະດານຫລືເຈ້ຽນ້ອຍທີ່ຂຽນໄວ້ຕອນເລີ້ມຕົ້ນນັ້ນ.

# ຄຳແນະນຳການສອນ

## ບົດຮຽນທີ 3

## ທາງດຽວເທົ່ານັ້ນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຄາລາເຕັຽ 3:1-18

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ຄາລາເຕັຽ 3:1-18

ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າເຮົາທັງຫລາຍຈະມີສ່ວນໃນພຣະອົງມີແຕ່ທາງຄວາມເຊື່ອເທົ່ານັ້ນ. ບໍ່ແມ່ນມາຈາກການເຮັດດີແລະຈາກການປະຕິບັດບັນຍັດຕ່າງໆ.

ຄຳຖາມເພື່ອການສຳຣວດ: ຄົນເຮົາຈະມີຄວາມສັມພັນກັບພຣະເຈົ້າໄດ້ຢ່າງໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາທັງຫລາຍຮູ້ວ່າຄວາມເຊື່ອເທົ່ານັ້ນເຮັດໃຫ້ເຮົາມີຄວາມສັມພັນແລະໃກ້ຊິດກັບພຣະເຈົ້າໄດ້.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.
- ສ້າງຄອບຄົວໃຫ້ເຂັ້ມແຂງໃນຄວາມເຊື່ອໃນພຣະເຈົ້າ ແລະຮັບໃຊ້ໃນພຣະນາມແຫ່ງພຣະເຢຊູຄຣິດ

ນຳເຣື່ອງເຂົ້າສູ່ຊີວິດ:

ກ່ອນອື່ນຄຣູນຳພານັກຮຽນອ້ອນວອນ

1. ຈັດໃຫ້ນັກຮຽນລຽນແຖວໂດຍຄວາມຽຽບສງົບ. ເປີດສຽງດົນຕຣີຄ່ອຍໆ ເຊັ່ນເພງເມືອງສວັນ, ເພງພຣະຄຸນພຣະເຈົ້າ, ຫລືເພງອື່ນໆທີ່ກ່ຽວຂ້ອງກັບການເຂົ້າປະຕູສວັນ.
   ກ. ຄຣູອາດຈະເປັນນາຍປະຕູສວັນ ຖືປື້ມບັນຊີລາຍຊື່ ຍືນຢູ່ບ່ອນສູງແດ່ ຫລືມີບ່ອນວາງປື້ມຄືບ່ອນເທສນາ.
   ຂ. ຫາກເປັນໄປໄດ້ໃຫ້ມີເທວະດານຸ່ງເຄື່ອງຂາວຈັກສອງຄົນ ຍືນຢູ່ຂ້າງຫລັງຂອງນາຍປະຕູສວັນ. ແລະພວກແຕ່ງຕົວຍົມພິບານຈັກສອງຄົນຍືນຢູ່ອີກດ້ານນຶ່ງຂອງນາຍປະຕູ.
   ຄ. ບ່ອນນາຍປະຕູເປີດໄຟຟ້າສົມຄວນໃຫ້ຮຸ່ງກວ່າບ່ອນຄົນໃນແຖວ ເພື່ອຄົນຈະໄດ້ສົນໃຈນຳນາຍປະຕູ.
   ງ. ເລີ້ມສຳພາດຜູ້ທີ່ນຶ່ງ

ນາຍປະຕູ: ເຈົ້າຊື່ຫຍັງ?

ຊາຍນັ້ນ: ຂ້ານ້ອຍຊື່ທ້າວບຸນຫລາຍ

ນາຍປະຕູ: ຈົ່ງເລົ່າຊີວິດຂອງເຈົ້າໃຫ້ຂ້ອຍຟັງເບິ່ງດູ.

ຊາຍນັ້ນ: ຂ້ານ້ອຍເປັນຄົນເປັນຄົນຖືສິລກິນທານ ເຮັດບຸນເຮັດທານທຸກປີ, ຂ້ານ້ອຍນັບຖືແລະຂາບໄຫວ້ທຸກ ຢ່າງເຊື່ອໃນພະເຈົ້າທຸກອົງ ເພື່ອຂ້ານ້ອຍຈະໄດ້ພົ້ນ, ໂບດຂ້ານ້ອຍກະໄປ, ວັດຂ້ານ້ອຍກະທານ, ແນວໃດດີຂ້ານ້ອຍເຮັດຫມົດ, ຂ້ານ້ອຍເຊື່ອວ່າສາສນາໃນໂລກດີຫມົດ.

ນາຍປະຕູ: ຈ່າຍົມພິບານເອົາຜູ້ນີ້ໄປໄດ້ແລ້ວ.

(<u>ວ່າແລ້ວຍົມພິບານທັງສອງກໍໄປມັດແລະຄຸມເອົາຊາຍນັ້ນອອກໄປຕໍ່ຫນ້າຕໍ່ຕາຂອງຝູງຊົນທັງຫລາຍ</u>).

2. ນາຍປະຕູສໍາພາດຜູ້ທີ່ສອງ

ນາຍປະຕູ: ຈົ່ງກ່າວສິ່ງທີ່ດີໃນຊີວິດຂອງເຈົ້າມາເບິ່ງດູ.

ຊາຍນັ້ນ: ຂ້ານ້ອຍແຕ່ງງານກັບຍິງຄົນດຽວແລະຢູ່ນໍາກັນຈົນຮອດ 50 ປີບໍ່ເຄີຽປະຮ້າງກັນຈັກເທື່ອ.

ນາຍປະຕູ: ດີຫລາຍ...ໄດ້... ນຶ່ງຄະແນນ. ອັນໃດອີກແດ່?

ຊາຍນັ້ນ: ຂ້ານ້ອຍໄປໂບດທຸກວອາທິດບໍ່ເຄີຽຂາດຈັກເທື່ອໄປທັງເຊົ້າແລະແລງ.

ນາຍປະຕູ: ດີ, ໄດ້ອີກນຶ່ງຄະແນນຮວມເປັນສອງ. ເວົ້າຕໍ່ໄປແມ່ນຫຍັງອີກແດ່?

ຊາຍນັ້ນ: ຂ້ານ້ອຍອາສາສມັກຮັບໃຊ້ໃນວຽກງານຕ່າງໆໃນໂບດ ເຊັ່ນ ຊ່ອຍຄົນຍາກຈົນ, ຊ່ອຍເດັກກໍາພ້າ, ເອົາເຂົ້າປາອາຫານໃຫ້ຄົນຂາດທີ່ຢູ່ອາສັຍໄດ້ຢູ່ໄດ້ກິນ.

ນາຍປະຕູ: ທັງຫມົດນີ້ກໍສົມຄວນໄດ້ອີກນຶ່ງຄະແນນ.

ຊາຍນັ້ນ: ນຶ່ງຄະແນນ?.... ໃນກົດຣະບຽບຂອງທ່ານບໍ່ມີໃຜໄດ້ຮອດຮ້ອຍຄະແນນດອກ ຄັນບໍ່ແມ່ນດ້ວຍພຣະຄຸນພຣະເຈົ້າຈ້າງກະບໍ່ໄດ້ດອກ. ລາວຈົ່ມ

ນາຍປະຕູ: ເຈົ້າໄດ້ຮ້ອຍນະແນນ, ເຊີນເຂົ້າມາໄດ້.

<u>(ວ່າແລ້ວເທວະດາທັງສອງກໍໄປຮັບເອົາຊາຍນັ້ນເຂົ້າໄປຍັງເມືອງສວັນ) ແລະຄຣູເຊີນນັກຮຽນນັ່ງ</u>

## <u>ຄຣູສລຸບເຣື່ອງໃຫ້ນັກຮຽນຟັງ:</u>

ເຣື່ອງນີ້ໄດ້ວາດພາບໃຫ້ເຮົາເຫັນວ່າໃນການເຮັດດີແລະຕິບັດຕາມບັດຍັດນັ້ນເປັນໄປບໍ່ໄດ້ທີ່ຈະກາຍເປັນຄົນຊອບທັມ. ໃນບົດຮຽນບົດນຶ່ງແລະບົດສອງທີ່ຜ່ານໂປໂລມີຄວາມຄຽດຮ້າຍຄຣິສຕຽນໃນແຂວງຄາລາເຕັຽກ່ຽວກັບຄວາມເຊື່ອຂອງພວກເຂົາບໍ່ແນ່ນອນ. ພວກເຂົາພາກັນຫູເບົາໃຈງ່າຍ ເຊື່ອຟັງຄົນໂດຍບໍ່ໄດ້ພິຈາຣະນາໃຫ້ຖ້ວນທີ່. ພວກເຂົາພາກັນເຂົ້າໃຈວ່າຄວາມລອດພົ້ນມີມາດ້ວຍການປະຕິບັດ. ແນ່ນອນຄວາມເຊື່ອຕ້ອງມີການປະຕິບັດ. ການປະຕິບັດທີ່ບໍ່ມີຄວາມເຊື່ອກໍບໍ່ມີຄວາມຫມາຍຫຍັງຫມົດ ແລະຄວາມເຊື່ອທີ່ບໍ່ມີການປະຕິບັດຄວາມເຊື່ອນັ້ນກໍໃຊ້ການບໍ່ໄດ້ ໄຮ້ປໂຍດ (ຢາໂກໂບ 2:20).

3. ຂໍໃຫ້ຜູ້ນຶ່ງອ່ານ (3:1-5) ແລະຄຣູຖາມນັກຮຽນ ເປັນຫຍັງໂປໂລຈຶ່ງເວົ້າໃຫ້ຄຣິສຕຽນໃນແຂວງຄາລາເຕັຽວ່າ "ຄົນບໍ່ມີຄວາມຄິດ" ເຊີນສົນທະນາກັນ.

4. ຂໍໃຫ້ຜູ້ນຶ່ງອ່ານ ( 3:6-14) ແລະຄຣູຖາມ ດ້ວຍເຫດໃດພຣະເຈົ້າຈຶ່ງຊົງຖືວ່າ ອັບຣາຮາມເປັນຄົນຊອບທັມ?
   <u>ຄໍາຕອບ:</u> ດ້ວຍຄວາມເຊື່ອ

5. ຂໍໃຫ້ຜູ້ນຶ່ງອ່ານ (3:15-20) ແລະຄຣູຖາມ ເນື່ອງດ້ວຍຄວາມເຊື່ອເຮັດໃຫ້ອັບຣາຮາມກາຍເປັນຄົນຊອບທັມແລ້ວ ພຣະເຈົ້າໄດ້ສັນຍາກັບອັບຣາຮາມຢ່າງໃດ? <u>ຄໍາຕອບ:</u> ອວຍພອນເຊື້ອສາຍຂອງເພິ່ນ

6. ພຣະເຈົ້າສັນຍາໃຫ້ເຊື້ອສາຍຂອງອັບຣາຮາມນັ້ນແມ່ນຫມາຍເຖິງໃຜ? <u>ຄໍາຕອບ:</u> ຫມາຍເຖິງພຣະເຢຊູຜູ້ດຽວ. ດັ່ງນັ້ນຜູ້ທີ່ເຊື່ອພຣະເຢຊູກໍແມ່ນເຊື້ອສາຍຂອງອັບຣາຮາມ.

7. ຄຣູຊັກຊວນນັກຮຽນຖວາຍຕົວດ້ວຍຄວາມເຊື່ອ, ຫາກມີຄົນທີ່ຍັງບໍ່ເຊື່ອຢູ່ດ້ວຍໃຫ້ຖາມເພິ່ນວ່າເພິ່ນຈະຍອມເຊື່ອ ໃນອົງພຣະເຢຊູໃນວັນນີ້ບໍ່? ຊີ້ໃຫ້ເພິ່ນເຫັນລະຄອນທີ່ໄດ້ສແດງມາຕອນຕົ້ນນັ້ນເປັນເຣື່ອງທີ່ຈະເກີດຂຶ້ນແທ້.

8. ອ້ອນວອນປິດ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 4</u>
# <u>ເວລາອັນເຫມາະສົມ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຄາລາເຕັຽ 3:19--4:11

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ຄາລາເຕັຽ 3:19--4:31

<u>ຈຸດສຳຄັນຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຈົ້າໄດ້ສົ່ງພຣະບຸດຂອງພຣະອົງລົງມາເກີດຕາມກຳນົດເວລາ ເພື່ອເຮົາຈະບໍ່ໄດ້ເປັນຂ້ອຍຂ້າຂອງບັນຍັດຕໍ່ໄປ ແຕ່ເປັນລູກຂອງພຣະເຈົ້າ.

<u>ຄຳຖາມເພື່ອການສຳຣວດ:</u> ພຣະບັນຍັດມີໄວ້ເພື່ອຫຍັງ? ຄຣິສຕຽນເຮົາຄວນຖືຮັກສາກົດບັນຍັດຫລືບໍ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາທັງຫລາຍໄດ້ປຽບທຽບຣະຫວ່າງການປະຕິບັດພຣະບັນຍັດແລະການເປັນລູກຂອງພຣະເຈົ້າ ມີຄວາມແຕກຕ່າງກັນຢ່າງໃດ?

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.
- ສ້າງຄອບຄົວໃຫ້ເຂັ້ມແຂງໃນຄວາມເຊື່ອໃນພຣະເຈົ້າ ແລະຮັບໃຊ້ໃນພຣະນາມແຫ່ງພຣະເຢຊູຄຣິດ

<u>ນຳເຣື່ອງເຂົ້າສູ່ຊີວິດ:</u>

ໂປໂລອະທິບາຍວ່າ ກົດບັນຍັດບໍ່ສາມາດນຳໄປສູ່ຄວາມລອດພົ້ນໄດ້ (3:19). ກົດບັນຍັດແມ່ນຣະບຽບການຕ່າງ ໆ ຂອງ ການຢູ່ກິນຂອງຄົນເຮົາ, ແລະຣະບຽບນຶ່ງອີກແມ່ນກົດຣະບຽບການນະມັສການ. ກົດຣະບຽບທັງສອງຢ່າງນີ້ເປັນເຄື່ອງບົ່ງບອກວ່າຄົນໃດຜິດແລະຄົນໃດຖືກ, ສ່ວນຄວາມລອດພົ້ນນັ້ນມີມາດ້ວຍທາງດຽວດັ່ງທີ່ເຮົາໄດ້ຮຽນມາແລ້ວໃນບົດຮຽນທີສາມທີ່ຜ່ານມາ. ທາງນັ້ນຄືມະນຸດຈຳເປັນຕ້ອງວາງໃຈເຊື່ອໃນພຣະບຸດຂອງພຣະເຈົ້າເທົ່ານັ້ນ.

1. ຂຽນຫົວເຣື່ອງໃຫຍ່ໃສ່ກະດານ ຫລືຂຽນເປັນເປັນໂພດສະເຕີໃຫຍ່ວ່າ "ເຖິງເວລາແລ້ວ" ຈັດໂຕະວາງຂອງເກົ່າແກ່ຕາມໂຕະ. ເມື່ອນັກຮຽນມາຮອດສເນີໃຫ້ເຂົາເຈົ້າພິຈາຣະນາເບິ່ງຂອງເກົ່າແກ່ ຫລືຂອງຫມົດສມັຍໃຊ້ແລ້ວ.

2. ຖາມນັກຮຽນດັ່ງນີ້: ທ່ານເຄີຍລືມເວລານັດຫມາຍບໍ່? ເຊັ່ນມີນັດກັບທ່ານຫມໍແລ້ວບໍ່ໄດ້ໄປ, ນັດຫມູ່ເພື່ອນວ່າຈະໄປຢາມແຕ່ລືມໄປ, ຫລືຮອດມື້ປ່ຽນນຶ່ງຊົ່ວໂມງໄປຫນ້າຫລືກັບຫລັງແລ້ວລືມປ່ຽນ ອາຈເປັນເຫດໃຫ້ໄປໂບດຊ້າໂພດບາງທີກໍໄປໄວໂພດ. ບົດຮຽນນີ້ຢາກບອກໃຫ້ທ່ານຮູ້ວ່າທ່ານເອງລືມໄປແລ້ວວ່າທ່ານເປັນບຸດຂອງພຣະເຈົ້າຈຶ່ງເຮັດໄປຕາມຣາຄະຕັນຫາຂອງຕົນເອງ.

3. ກ່າວເຣື່ອງບົດຮຽນອາທິດແລ້ວນີ້ນ້ອຍນຶ່ງເຊັ່ນ:

- ອັບຣາຮາມກາຍເປັນຄົນຊອບທັມດ້ວຍຄວາມເຊື່ອຂອງເພິ່ນ
- ໂມເຊໄດ້ຮັບບັນຍັດຈາກພຣະເຈົ້າ 430 ຫລັງຈາກພຣະເຈົ້າສັນຍາກັບອັບຣາຮາມ ແລະກົດບັນຍັດບໍ່ໄດ້ປ່ຽນແປງພຣະສັນຍາຂອງພຣະເຈົ້າທີ່ມີຕໍ່ອັບຣາຮາມເລີຍ.
- ຜູ້ເປັນລູກຫລານຂອງອັບຣາຮາມແມ່ນຜູ້ທີ່ເຊື່ອຄືເພິ່ນ.

4. ແບ່ງນັກຮຽນເປັນສາມກຸ່ມ

   1. ອ່ານ (3:19-4:3) ພຣະເຈົ້າໄດ້ໃຫ້ກົດບັນຍັດເພື່ອຫຍັງ? ກົດບັນຍັດມີໜ້າທີ່ແນວໃດ? ກົດບັນຍັດນີ້ຈະໃຊ້ຍາວນານໄປຮອດໃສ? ຄົນທີ່ໄດ້ຮັບບັບຕິສະມາແລ້ວເປັນແນວໃດ? <u>ໃຫ້ກຸ່ມນີ້ຊອກຄຳຕອບ.</u>

   2. ອ່ານ (4:4-20) ເມື່ອເຖິງກຳນົດແລ້ວມີຫຍັງເກີດຂຶ້ນ? ໝາຍຄວາມວ່າແນວໃດ? ພຣະອົງຊົງໄຖ່ເຮົາໃຫ້ຢູ່ໃນຖານະອັນໃດ? ຂ້ອຍຂ້າແລະລູກມີຊີວິດຕ່າງກັນຢ່າງໃດ? ເປັນຫຍັງເມື່ອກ່ອນຈຶ່ງບໍ່ສາມາດຮູ້ຈັກພຣະເຈົ້າ? ແມ່ນຫຍັງນຳພາໃຫ້ຄຣິສຕຽນຄາລາເຕັຽກັບໄປຫາສິ່ງອຳນາດສັກສິດ? ລືມຄວາມຍິນດີແລ້ວໝາຍຄວາມວ່າແນວໃດ? <u>ໃຫ້ກຸ່ມນີ້ຊອກຄຳຕອບ.</u>

   3. ອ່ານ (4:21-31) ອັບຣາຮາມມີລູກຊາຍສອງຄົນເກີດມາແນວໃດ? ລູກທັງສອງມີຄວາມສຳຄັນຕ່າງກັນແນວໃດ? ເຮົາທັງຫລາຍເປັນລູກແນວໃດ? <u>ໃຫ້ກຸ່ມນີ້ຊອກຄຳຕອບ.</u>

5. ໃຫ້ກຸ່ມທີ່ 1 ລາຍງານ, ກຸ່ມ 2 ລາຍງານ ແລະກຸ່ມສາມລາຍງານ.

6. ຄຣູສລຸບ: ດຽວນີ້ເຮົາທັງຫລາຍຮູ້ແນ່ນອນແລ້ວ ເຮົາເປັນລູກຂອງພຣະເຈົ້າໂດຍທາງຄວາມເຊື່ອຂອງພວກເຮົາ ດັ່ງນັ້ນເຮົາບໍ່ຄວນປະຕິບັດຕົນໃຫ້ເປັນເໝືອນເປັນລູກຂອງຍິງຄົນຮັບໃຊ້. ບໍ່ຄວນຖືວ່າວັນນີ້ດີ ວັນນັ້ນບໍ່ດີ ຈົ່ງເຂົ້າໃຈວ່າພຣະເຈົ້າສ້າງຕັ້ງວັນອາທິດຈົນກະທັ້ງເຖິງວັນຈັນ. ຫາກເຮົາຍັງຖືວັນເດືອນປີຢູ່ກໍເທົ່າກັບວ່າກົດນັ້ນບັງຄັບເຮົາເໝືອນເຮົາເປັນນັກໂທດຜູ້ນຶ່ງນັ້ນເອງ. ຈົ່ງສັງເກດເບິ່ງໃນຕົ້ນເດີມນັ້ນພຣະເຈົ້າຊົງສ້າງແລະພຣະອົງກໍເຫັນວ່າທຸກຢ່າງນັ້ນດີ ສ່ວນສິ່ງບໍ່ດີເກີດຂຶ້ນຕາມພາຍຫລັງນັ້ນແມ່ນມະນຸສແລະມານພາກັນເຮັດ.

7. ອ້ອນວອນປິດ

# <u>ຄຳແນະນຳສຳລັບຄຣູສອນ</u>

# <u>ບົດຮຽນທີ 5</u>

# <u>ມີອິສຣະຈາກຄວາມບາບເພື່ອຮັບໃຊ້</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຄາລາເຕັຽ 5:1-6, 13-26

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ຄາລາເຕັຽ 5

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະຄຣິດຊົງປົດປ່ອຍພວກເຮົາຈາກການເປັນທາດ ແລະຈາກຄວາມບາບເພື່ອພວກເຮົາຈະໄດ້ຮັບໃຊ້ພຣະອົງດ້ວຍຄວາມຮັກ ໂດຍການນຳພາຂອງພຣະວິນຍານບໍຣິສຸດ.

<u>ຄຳຖາມເພື່ອການສຳຣວດ:</u> ຖ້າເຮົາມີເສຣີພາບໃນພຣະຄຣິດ, ພວກເຮົາສາມາດເຮັດທຸກຢ່າງໄດ້ຕາມໃຈບໍ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ນຳເສຣີພາບຂອງພຣະຄຣິດມາສູ່ຊີວິດຂອງພວກເຮົາ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ຂຽນ "ຂ້ອຍມີເສຣີພາບ" ໃສ່ປ້າຍແລ້ວຕິດໄວ້ໃກ້ໜ້າກະດານ. ຖາມນັກຮຽນຜູ້ທີ່ເຄີຍຖືກຄຸມຂັງມາກ່ອນເຖິງຄວາມຮູ້ສຶກຂອງເຂົາເວລາໄດ້ຮັບການປົດປ່ອຍ. ຕົວຢ່າງ: ນັກໂທດຄົນນຶ່ງໂດດຄຸກທີ່ ຄາລີຟໍເນັຍ. ຫລັງຈາກຫາຍຕົວໄປໄດ້ສາມວັນ, ເຂົາໂທຣະສັບກັບໄປຫາຄຸກບ່ອນເຂົາເຄີຍຢູ່ເພື່ອໃຫ້ເຈົ້າໜ້າທີ່ມາຮັບເອົາເຂົາ. ມີຄົນຖາມເຂົາພາຍຫລັງຈາກເຫດການນີ້ວ່າ "ເປັນຫຍັງເຈົ້າຈຶ່ງຢາກກັບມາທີ່ຄຸກນີ້ອີກ?" ເຂົາຕອບວ່າ, "ຂ້ອຍເຄີຍຢູ່ຄຸກນີ້ມາໄດ້ຫລາຍສິບປີ; ຂ້ອຍຢາກອອກໄປຂ້າງນອກທີ່ມີເສຣີພາບ. ແຕ່ເມື່ອອອກໄປແລ້ວຂ້ອຍບໍ່ຮູ້ຈະຢູ່ແນວໃດ ເພາະຂ້ອຍເຄີຍຢູ່ໃນຣະບຽບນີ້ມາກ່ອນແລ້ວ."

2. ອະທິບາຍໃຫ້ເພື່ອນນັກຮຽນຟັງວ່າຊາວຄາລາເຕັຽເກີດມີບັນຫາເວລາເຂົາເຈົ້າໄດ້ຮັບເສຣີພາບໃນພຣະຄຣິດ. ເສຣີພາບນຳຄວາມຮັບຜິດຊອບມາສູ່ຊີວິດ, ບາງຄັ້ງເສຣີພາບສາມາດເຮັດໃຫ້ຄົນເກີດຄວາມຢ້ານກົວແລະຄວາມສັບສົນ.

3. ເວົ້າກັບນັກຮຽນວ່າ ເສຣີພາບບໍ່ແມ່ນຂອງໄດ້ລ້າໆ; ຕົວຢ່າງ: ປະເທດສະຫະຣັຖອະເມຣິກາມີເສຣີພາບເພາະຫລາຍຄົນໄດ້ເສັຽສະລະຊີວິດເພື່ອຕໍ່ສູ້ເອົາສິດເສຣີນັ້ນ. ມີເສຣີພາບແນວໃດແດ່ທີ່ທ່ານໄດ້ຮັບໃນທຸກມື້ນີ້ ເພາະມີຄົນອື່ນໄດ້ຍອມເສັຽສະລະເພື່ອທ່ານ?

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

4. ຂຽນຫົວຂໍ້ເຣື່ອງແລະໂຄງຮ່າງຂອງບົດຮຽນນີ້ໃສ່ກະດານ:

ມີອິສຣະພາບຈາກຄວາມບາບເພື່ອຮັບໃຊ້

- ຈົ່ງຕັ້ງໝັ້ນຄົງຢູ່ໃນເສຣີພາບ (ຄາລາເຕັຽ 5:1-6)
- ໃຊ້ເສຣີພາບເພື່ອອຮັບໃຊ້ຄົນອື່ນ (5:13-15)
- ຈະດໍາເນີນຊີວິດແນວໃດ (5:16-26)

5. ເບິ່ງຫົວເຣື່ອງ "ຈົ່ງຕັ້ງໝັ້ນຄົງຢູ່ໃນເສຣີພາບ;" ແລະຂຽນ "ເພື່ອ________ນັ້ນແຫລະ, ພຣະຄຣິດຈຶ່ງໄດ້ຊົງໂຜດເຮົາທັງຫລາຍເປັນອິສຣະ" ໃສ່ກະດານແລ້ວໃຫ້ນັກຮຽນຜູ້ນຶ່ງອ່ານ ຄາລາເຕັຽ 5:1-2. ຂໍໃຫ້ນັກຮຽນຫາຄໍາເວົ້າມາຕື່ມໃສ່ບ່ອນຫວ່າງ.

6. ໃຊ້ຄໍາອະທິບາຍໃນບົດຮຽນເພື່ອເວົ້າເຖິງ ເສຣີພາບສາມຢ່າງຂອງຊາວຄາລາເຕັຽ (ເສຣີພາບຈາກກົດບັນຍັດ, ຈາກຄວາມບາບ, ຈາກພຣະພິໂຣດ).

7. ອ່ານ ພຣະຄໍາຂໍ້ 5:3. ຖາມນັກຮຽນວ່າ ພວກເຂົາເຈົ້າຄິດວ່າ ໂປໂລໝາຍເຖິງຫຍັງເວລາເພິ່ນເວົ້າວ່າ "ພຣະບັນຍັດທັງໝົດ?"ໃນພຣະທັມຕອນນີ້. ອະທິບາຍຄວາມໝາຍພ້ອມດ້ວຍຜົນຂອງການປະຕິເສດອິສຣະພາບທີ່ພຣະເຈົ້າປະທານ.

8. ອ່ານພຣະຄໍາຂໍ້ 5:4-6. ອະທິບາຍການ "ຫລຸດຕົກຈາກພຣະຄຸນ" ທີ່ໂປໂລໄດ້ເວົ້າໃນຕອນນີ້. ຖາມນັກຮຽນວ່າເຂົາເຈົ້າຄິດແນວໃດໃນເຣື່ອງນີ້. ເປັນຫຍັງເຂົາເຈົ້າຈຶ່ງຄິດຢ່າງນັ້ນ.

9. ອ່ານ 5:7-12 ໃຫ້ທຸກຄົນໄດ້ຍິນນໍາ. ຂໍໃຫ້ທຸກຄົນຟັງເບິ່ງຄວາມຄິດຂອງໂປໂລກ່ຽວກັບພວກຮັບພິທີຕັດ (ພວກຢູດາຍໄອເຊີ). ສົນທະນາຄໍາຕອບ; ຕັ້ງຄໍາຖາມ: ທ່ານຮູ້ຈັກແນວໃດແດ່ທີ່ກໍາລັງຈະເອີ້ນທ່ານໃຫ້ຫ່າງອອກຈາກພຣະເຢຊູຄຣິດ?

10. ເບິ່ງຫົວຂໍ້ "ໃຊ້ເສຣີພາບເພື່ອຮັບໃຊ້ຄົນອື່ນ." ໃຫ້ນັກຮຽນຄົນນຶ່ງອ່ານຂໍ້ 5:13-14 ແລ້ວຊອກຫາຄໍາສັ່ງ ສາມຢ່າງທີ່ໂປໂລໃຫ້ກັບຊາວຄາລາເຕັຽ (ຢ່າເອົາເສຣີພາບນັ້ນເປັນຊ່ອງທາງປ່ອຍຕົວໄປຕາມທັມມະດາໂລກ; ຮັບໃຊ້ເຊິ່ງ ກັນແລະກັນ; ຈົ່ງຮັກເພື່ອນບ້ານ). ຊີ້ບອກໃຫ້ທຸກຄົນຮູ້ເຖິງຜົນ (5:15) ຂອງການບໍ່ເຮັດຕາມຄໍາສັ່ງນີ້.

11. ເບິ່ງຫົວຂໍ້ "ຈະດໍາເນີນຊີວິດແນວໃດ." ໃຫ້ນັກຮຽນຄົນນຶ່ງອ່ານ 5:19-21, ບອກໃຫ້ທຸກຄົນຕັ້ງໃຈຟັງເບິ່ງການງານຂອງມະນຸດທັມມະດາ ທີ່ໂປໂລຂຽນໄວ້ໃນພຣະທັມຕອນນີ້. ອ່ານ 5:22-23, ຂຽນຜົນຂອງພຣະວິນຍານໃສ່ກະ ດານເພື່ອທຸກຄົນຈະໄດ້ເຫັນ (ທ່ານອາດຈະແບ່ງກະດານເປັນສອງພາກ; ຝ່າຍນຶ່ງຂຽນການງານຂອງມະນຸດທັມມະດາ ແລະອີກຝ່າຍນຶ່ງຂຽນຜົນຂອງພຣະວິນຍານ). ສຶກສາພິຈາຣະນາເບິ່ງຄວາມແຕກຕ່າງຂອງສອງຝ່າຍ.

### <u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

12. ອະທິບາຍໂດຍຫຍໍ້ຜົນຂອງພຣະວິນຍານແຕ່ລະຢ່າງ; ໃຫ້ນັກຮຽນສະແດງຄວາມຄິດສ່ວນຕົວວ່າ "ເປັນຫຍັງ ພວກເຂົາເຈົ້າຈຶ່ງບໍ່ມີສິ່ງເຫລົ່ານີ້ຢູ່ໃນຊີວິດ."

13. ພານັກຮຽນອະທິຖານແບບງຽບໆຂໍໃຫ້ພຣະເຈົ້າຊົງປະທານອິສຣະພາບໃຫ້ແຕ່ລະຄົນ. ອະທິຖານປິດການສຶກສາພຣະທັມ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# ທາງໄປ່ສູ່ການເປັນຄຣິສຕະຈັກທີ່ສົມບູນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຄາລາເຕັຽ 6:1-14

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ຄາລາເຕັຽ 6

ຈຸດສຳຄັນຂອງບົດຮຽນນີ້: ຖ້າເຮົາຮູ້ຈັກຄວາມໝາຍທີ່ວ່າພຣະຄຣິດຊົງຢູ່ໃນຊີວິດພວກເຮົາ, ພວກເຮົາຈະພຍາຍາມ ໃຊ້ຊີວິດຮ່ວມກັນໃນບັນຍາກາດຂອງຄຣິສຕຽນສັມພັນ.

ຄຳຖາມເພື່ອການສຳຣວດ: ພຣະເຢຊູຈະຍອມຮັບຮູ້ວ່າຄຣິສຕະຈັກທີ່ທ່ານສັງກັດຢູ່ນັ້ນແມ່ນຂອງພຣະອົງບໍ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ນຳຄວາມສັມພັນທີ່ແທ້ຈິງຂອງຄຣິສຕຽນໄປປະຕິບັດໃນຄວາມສັມພັນຂອງທ່ານ ກັບສະມາຊິກໃນຫ້ອງຮຽນ ແລະເພື່ອນສະມາຊິກໃນຄຣິສຕະຈັກ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເຮັດປ້າຍ (ກະດາດ) ກຽ່ວກັບຄຣິສຕະຈັກຂອງທ່ານ; ທ່ານອາດຈະໃຊ້ຮູບຖ່າຍ, ໃຊ້ລາຍການນະມັສການ, ແລະໃຊ້ສິ່ງຕ່າງໆທີ່ເປັນສັນຍາລັກໃນໂບດ ຂອງທ່ານ. ຕິດໄວ້ຝາຫ້ອງຮຽນເພື່ອທຸກຄົນຈະໄດ້ເຫັນ.

2. ເລົ່າເຣື່ອງຕໍ່ໄປນີ້ໃຫ້ນັກຮຽນຟັງ. ລິຊາ ແລະ ອາແລນ ຍ້າຍຈາກ ນອດຄາໂຣນລາຍນາ ມາຢູ່ເທກຊັດ. ເຂົາເຈົ້າກຳລັງຊອກຫາໂບດ. ລິຊາ ມັກໄປໂບດທີ່ໃຊ້ເພັງສັຣເສີນຫລາຍໆ, ອາແລນ ມັກໄປໂບດທີ່ພົວພັນກັບງານຮັບໃຊ້. ຫລັງ ຈາກໄດ້ໄປຢ້ຽມຢາມຫລາຍໆໂບດແລ້ວ, ເຂົາເຈົ້າຄິດວ່າໂບດທີ່ພວກເຂົາຕ້ອງການທີ່ສຸດແມ່ນໂບດທີ່ມີຄວາມເປັນມິດ. ຄຳຖາມສຳລັບນັກຮຽນ: ທ່ານຄິດວ່າພວກເຂົາເຄີຍໄດ້ມາຢ້ຽມໂບດພວກເຮົາແລ້ວບໍ່? ເປັນຫຍັງ?

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອະທິບາຍວ່າ ຄຣິສຕະຈັກທີ່ສົມບູນບໍ່ແຕກຕ່າງຫຍັງກັບຄົນທີ່ສົມບູນ. ການສຳຣວດ ແລະ ການເບິ່ງແຍງຕົວເອງເປັນສິ່ງທີ່ຫລີກລ້ຽງບໍ່ໄດ້. ເຕືອນນັກຮຽນວ່າ ມື້ນີ້ພວກເຂົາເຈົ້າຈະສຳຣວດເບິ່ງຄຣິສຕະຈັກຂອງເຂົາເຈົ້າໂດຍຈະໃຊ້ຄຳແນະນຳຂອງໂປໂລໃນພຣະທັມຄາລາເຕັຽ 6.

4. ຂຽນຫົວຂໍ້ ແລະໂຄງຮ່າງຂອງບົດຮຽນໃສ່ກະດານ:

ຄຣິສຕະຈັກທີ່ສົມບູນ (ຄາລາເຕັຽ 6:1-18)

ກ. ຊ່ວຍຄົນໃຫ້ຄືນດີດ້ວຍວິທີທີ່ຖືກຕ້ອງ (6:1)

ຂ. ຊ່ອຍແບກພາຣະຂອງກັນແລະກັນ (6:2-5)
ຄ. "ດູແລຜູ້ສອນພຣະທັມ" (6:6)
ງ. ຍອມຮັບກົດຂອງການປູກຝັງ (6:7-10)
ຈ. ຮູ້ສິ່ງທີ່ເຂົາສາມາດໂອ້ອວດໄດ້ (6:12-16)
ສ. ພຣະຄຣິດໄດ້ປະທັບຕາໄວ້ແລ້ວ (6:17-18)

5. ອ່ານ ຄາລາເຕັຽ 6:1 ໃຫ້ທຸກຄົນໄດ້ຍິນ. ເບິ່ງຫົວເຣື່ອງ "ຄຣິສຕະຈັກສົມບູນຊ່ອຍຄົນໃຫ້ຄືນດີດ້ວຍວິທີທີ່ຖືກຕ້ອງ;" ອະທິບາຍຄຳແນະນຳສີ່ຢ່າງຂອງໂປໂລກ່ຽວກັບກົດວິນັຍ. ຄຳຖາມ: ເປັນຫຍັງຄຣິສຕະຈັກສ່ວນຫລາຍໃນສມັຍນີ້ ບໍ່ໃຊ້ກົດວິນັຍ?

6. ໃຫ້ນັກຮຽນຄົນນຶ່ງອ່ານ 6:2. ເບິ່ງຫົວຂໍ້ "ຄຣິສຕະຈັກສົມບູນຊ່ອຍແບກພາຣະຂອງກັນແລະກັນ;" ອະທິບາຍຄຳວ່າ "ພາຣະ" (ພາຣະອັນຫນັກ, ບັນຫາ), ແລະໃຫ້ຕົວຢ່າງຂອງບາງຄົນທີ່ກຳລັງຖືກປັນຫາ. ຄຳຖາມ: ບັນຫາຂອງຄຣິສ ຕຽນ ແຕກຕ່າງກັບບັນຫາຂອງຄົນທີ່ບໍ່ຮູ້ພຣະເຈົ້າແນວໃດ? (ປົກຕິແລ້ວບັນຫາບໍ່ໄດ້ຕ່າງກັນ). ທຸກໆຄົນມີບັນຫາ.

7. ຄຣິສຕະຈັກສົມບູນຊ່ອຍແບກພາຣະຂອງກັນແລະກັນ; ອະທິບາຍຄວາມສຳຄັນເຣື່ອງການຊ່ວຍເຫລືອຊຶ່ງກັນແລະກັນໃນເວລາຂັດສົນ. ຫລາຍເທື່ອພວກເຮົາສາມາດເຂົ້າໃຈບັນຫາຂອງຄົນອື່ນເພາະຕົວເຮົາເອງເຄີຍມີປະສົບການຢ່າງ ນັ້ນມາກ່ອນ.

8. ໃຫ້ນັກຮຽນຄົນນຶ່ງອ່ານ 6:4-5. ຂໍໃຫ້ຜູ້ນຶ່ງອ່ານພຣະຄຳໃນຕອນນີ້ ເປັນພາສາທີ່ໃຊ້ກັນທຸກມື້ນີ້ ເພື່ອໃຫ້ທຸກຄົນເຂົ້າໃຈ. (ທຸກຄົນຕ້ອງຮັບຜິດຊອບຕໍ່ພາຣະຂອງຕົນເອງ)

9. ສຶກສາຂໍ້ "ຄຣິສຕະຈັກສົມບູນ ດູແລຜູ້ສອນພຣະທັມ." ອ່ານພຣະທັມຂໍ້ 6:6 ໃຫ້ທຸກຄົນໄດ້ຍິນ. ເວົ້າເຣື່ອງງົບປມານຂອງຄຣິສຕະຈັກ ເພື່ອສິດຍາພິບານ; ຄຣິສຕະຈັກຂອງທ່ານໄດ້ວາງແຜນໃນການດູແລຜູ້ຮັບໃຊ້ແນວໃດແດ່? ໃຊ້ເວລາ ເພື່ອສອນທຸກຄົນເຣື່ອງການເບິ່ງແຍງຜູ້ຮັບໃຊ້ທີ່ໂບດຈ້າງມາທຳງານ.

10. ເບິ່ງຫົວຂໍ້ "ຄຣິສຕະຈັກສົມບູນ ຍອມຮັບກົດຂອງການປູກຝັງ." ໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ໂຢບ 4:8; ຜູ້ນຶ່ງ ອ່ານ ສຸພາສິດ 22:8; ຜູ້ນຶ່ງອ່ານ ໂຮເສອາ 8:7; ຜູ້ນຶ່ງອ່ານ 2 ໂກຣິນໂທ 9:6; ແລະອີກຜູ້ນຶ່ງໃຫ້ອ່ານ ຄາລາເຕັຽ 6: 7-10. ຖາມນັກຮຽນເບິ່ງວ່າມີໃຜແດ່ເຄີຍເປັນຊາວນາ ຫລືຊາວສວນ. ຖ້າມີ, ຖາມຄົນນຶ່ງວ່າເຂົາເຈົ້າເຫັນພ້ອມນຳ ກົດເຣື່ອງການປູກຝັງແລະການເກັບກ່ຽວໃນພຣະທັມຕອນນີ້ບໍ່? (ເວົ້າເຖິງເຣື່ອງ: ທ່ານເກັບກ່ຽວສິ່ງທີ່ທ່ານໄດ້ປູກລົງ ໄປໃນດິນ ແລະໃນຂນະດຽວກັນ ຖ້າທ່ານບໍ່ປູກ ທ່ານກໍຈະບໍ່ໄດ້ເກັບກ່ຽວ.

11. ອ່ານພຣະທັມ 6:12-16; ເບິ່ງບົດຮຽນໃນຫົວຂໍ້ "ຄຣິສຕະຈັກສົມບູນ ຮູ້ສິ່ງທີ່ເຂົາສາມາດໂອ້ອວດໄດ້." ສຶກສາເບິ່ງຄວາມແຕກຕ່າງລະວ່າງຄວາມໂອ້ອວດຂອງ ພວກຢູດາຍໃອເຊີ ແລະຄວາມໂອ້ອວດຂອງຄນະບັບຕິດ. ຄຳຖາມ: ແມ່ນຫຍັງຄືພື້ນຖານຂອງຄວາມໂອ້ອວດຂອງໂປໂລ? (ໄມ້ກາງແຂນຂອງພຣະຄຣິດ). ມີຫຍັງແດ່ທີ່ພວກ

ເຮົາຄວນຈະ ໂອ້ອວດໃນຄຣິສຕະຈັກຂອງເຮົາ?

12. ເບິ່ງຫົວຂໍ້ "ຄຣິສຕະຈັກສົມບູນ ພຣະຄຣິດໄດ້ປະທັບຕາໄວ້ແລ້ວ" ແລະອ່ານ 6:17-18ໃຫ້ທຸກຄົນຟັງ. ອະທິບາຍຄຳເວົ້າຂອງໂປໂລເຣື່ອງ ຕາປະທັບຢູ່ໃນເນື້ອກາຍ.

13. ຄຳຖາມສຳລັບສົນທະນາ: ຖ້າພວກຢູດາຍໂອເຊີຄິດວ່າ ການຮັບພິທີຕັດເປັນເຄື່ອງໝາຍເຖິງຄວາມລອດພົ້ນ, ສຳລັບຜູ້ຍິງ ພວກເຂົາຈະເຮັດແນວໃດ? ພວກຜູ້ຍິງຈະບໍ່ໄດ້ຮັບຄວາມລອດບໍ່? (ຂອບຄຸນພຣະເຈົ້າ, ພຣະເຢຊູໄດ້ທຳ ລາຍກຳແພງທີ່ກັ້ນຂວາງທັງໝົດນັ້ນແລ້ວ. ເພາະຜູ້ຍິງກໍໄດ້ຮັບຄວາມລອດພົ້ນເໝືອນກັບຜູ້ຊາຍ). ຄຳຖາມ: ຄຣິສ ຕະຈັກຂອງທ່ານມີຕາປະທັບແນວໃດແດ່ທີ່ບອກໃຫ້ເຫັນວ່າທ່ານເປັນຂອງພຣະຄຣິດ?

<u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

14. ຖາມນັກຮຽນດັ່ງຕໍ່ໄປນີ້ ແລະໃຫ້ເຂົາເຈົ້າຕອບ "ໄດ້ເຮັດ" ຫລື "ບໍ່ໄດ້ເຮັດ."

ຄຳຖາມ: ຄຣິສຕະຈັກຂອງທ່ານໄດ້...

______ຊ່ວຍຜູ້ທີ່ຫລົງຜິດໄປໃຫ້ກັບຄືນດີ?
______ຊ່ອຍແບກພາຣະໜັກຂອງກັນແລະກັນ?
______ໃຫ້ຄ່າຈ້າງແກ່ຜູ້ຮັບໃຊ້ຢ່າງເໝາະສົມ?
______ປະກາດພຣະທັມດ້ວຍຄວາມໝັ້ນພຽນ ແລະລໍຖ້າຜົນດ້ວຍຄວາມອົດທົນ?
______ເຫັນຈຳນວນຄົນເປັນໂອກາດເພື່ອຈະປ່ຽນແປງຊີວິດ ບໍ່ແມ່ນເພື່ອຈະໂອ້ອວດ?
______ຊັກຊວນສະມາຊິກໃຫ້ໄຊ້ປະສົບການໃນຊີວິດເພື່ອຊ່ວຍຄົນອື່ນ?

ສຶກສາເບິ່ງຄຳຕອບເພື່ອຈະໄດ້ຮູ້ວ່າຄຣິສຕະຈັກຈະເຮັດແນວໃດເພື່ອຈະໄດ້ເປັນຄຣິສຕະຈັກທີ່ສົມບູນ.

15. ປິດການສຶກສາດ້ວຍການອະທິຖານແລະຂອບພຣະຄຸນພຣະເຈົ້າສຳລັບຄຣິສຕະຈັກຂອງທ່ານແລະສະມາຊິກທຸກຄົນ.

# ຄຳແນະນຳສຳລັບຄຣູສອນ
# ບົດຣຽນທີ 7
# ພຣະເຈົ້າກຳລັງເຮັດຫຍັງຢູ່?

---

ຂໍ້ພຣະຄັມພີສຳລັບບົດຣຽນນີ້: ເອເຟໂຊ 1:1-14

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ເອເຟໂຊ 1

ຈຸດສຳຄັນຂອງບົດຣຽນນີ້: ຜ່ານອົງພຣະເຢຊູຄຣິດ, ພຣະເຈົ້າກຳລັງຈະນຳທຸກຢ່າງໃຫ້ມາຢູ່ໃຕ້ອຳນາດການປົກຄອງຂອງພຣະຄຣິດ; ທຸກຢ່າງໝາຍເຖິງມະນຸດທຸກຄົນບໍ່ວ່າເຂົາຈະເປັນໃຜ, ແລະກໍໝາຍເຖິງຕົວທ່ານດ້ວຍ.

ຄຳຖາມເພື່ອການສຳຣວດ: ແມ່ນຫຍັງຄືຈຸດປະສົງຂອງຊີວິດ?

ຈຸດປະສົງຂອງບົດຣຽນນີ້: ເພື່ອຈະໄດ້ເຂົ້າໃຈວ່າພຣະປະສົງຂອງພຣະເຈົ້າແມ່ນຫຍັງແທ້ ແລະຈຸດປະສົງເຫລົ່ານັ້ນກ່ຽວຂ້ອງກັບເຮົາຢ່າງໃດ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ແນະນຳຈຸດປະສົງຂອງບົດຣຽນນີ້ ແລ້ວຕັ້ງຄຳຖາມກັບພວກນັກຣຽນວ່າ ເປົ້າໝາຍຂອງຄຣິສຕະຈັກຂອງເຂົາເຈົ້າມີ ຫຍັງແດ່? ເຂົາເຈົ້າອາດຈະໃຫ້ຄຳຕອບຫລາຍໆຢ່າງ ແຕ່ໃຫ້ເລືອກເອົາ ເປົ້າໝາຍສາມຢ່າງທີ່ສຳຄັນທີ່ສຸດ. ບອກນັກ ຣຽນວ່າ ບົດຣຽນມື້ນີ້ຈະຊ່ວຍພວກເຮົາໃຫ້ຮູ້ວ່າເປົ້າໝາຍຂອງພຣະເຈົ້າສຳລັບພວກເຮົາຄືຫຍັງ.

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ອ່ານ ເອເຟໂຊ 1:1-2 ແລະຊັກຊວນນັກຣຽນໃຫ້ແບ່ງປັນສິ່ງທີ່ເຂົາເຈົ້າຮູ້ກ່ຽວກັບຄຣິສຕະຈັກທີ່ເມືອງເອເຟໂຊ. ຊອກຫາແຜນທີ່ ແລະ ຂໍ້ມູນຕ່າງໆກ່ຽວກັບເມືອງນີ້ເພື່ອຊ່ວຍໃຫ້ທຸກຄົນເຂົ້າໃຈເພີ້ມເຕີມ (ເມືອງເອເຟໂຊຕັ້ງຢູ່ພາກຕາ ເວັນຕົກຂອງປະເທດຕູຣະກີ ໃນສມັຍປັດຈຸບັນ).

3. ໃຫ້ຄົນນຶ່ງອ່ານພຣະທັມຂໍ້ 1:3-6 ແລະໃຫ້ຄົນອື່ນໆເບິ່ງຕາມໃນພຣະຄັມພີຂອງໃຜລາວ. ແບ່ງປັນຄວາມເຂົ້າໃຈຂອງແຕ່ລະຄົນໃນຕອນນີ້.

4. ບອກໃຫ້ນັກຣຽນຮູ້ວ່າ ການໄດ້ຮັບພອນຈາກຜູ້ເປັນພໍ່ຂອງແຕ່ລະຄອບຄົວເປັນສິ່ງສຳຄັນທີ່ສຸດສຳລັບຊີວິດຂອງພວກລູກໆໃນສມັຍພຣະຄັມພີ. ໃຊ້ຄຳຖາມຕໍ່ໄປນີ້ເພື່ອຊ່ວຍໃນການສົນທະນາ:

   - ລູກເຕົ້າໄດ້ຮັບພອນຈາກຜູ້ເປັນພໍ່ແມ່ວິທີໃດ?

- ພວກຊາວໜຸ່ມໄດ້ຮັບພອນຈາກໝູ່ເພື່ອນຂອງເຂົາເຈົ້າວິທີໃດ?
- ພວກຜູ້ໃຫຍ່ໄດ້ຮັບພອນຈາກໝູ່ເພື່ອນຂອງເຂົາເຈົ້າວິທີໃດ?
- ພວກເຮົາໄດ້ຮັບພຣະພອນດ້ານຈິດວິນຍານຈາກພຣະເຈົ້າວິທີໃດ? (ການເຂົ້າໃຈພຣະທັມ, ຈິດວິນຍານເຕັມໄປ ດ້ວຍການສັຣເສີນ, ຮູ້ສຶກວ່າພຣະເຈົ້າຊົງສຖິດຢູ່ນຳ...)

5. ຊີ້ໃຫ້ທຸກຄົນເຫັນວ່າພຣະຄຳເຫລົ່ານີ້ໄດ້ສອນວ່າພຣະເຈົ້າຊົງຮັກພວກເຮົາແລະຊົງເລືອກພວກເຮົາໄວ້. ຄຳຖາມ: ຄວາມຄິດນີ້ຈະຊ່ວຍພວກເຮົາໃຫ້ຮູ້ຈຸດປະສົງຂອງຊີວິດໄດ້ແນວໃດ? (ເຕືອນພວກເຮົາວ່າພຣະເຈົ້າຊົງເລືອກພວກເຮົາເພາະພຣະອົງຊົງຮັກເຮົາ).

6. ອະທິບາຍ ພຣະທັມຂໍ້ 1:4-8 ໂດຍໃຊ້ຄຳອະທິບາຍໃນຫົວເຣື່ອງ "ພຣະປະສົງຂອງພຣະເຈົ້າເຣື່ອງການຊົງເລືອກ." ອະທິບາຍຄຳສັບເຊັ່ນ:
   - ການເລືອກ--ດຶງອອກ ຫລື ຄັດເລືອກ
   - ບໍຣິສຸດ--ຖືກແຍກອອກໄວ້ຕ່າງຫາກ
   - ບໍ່ມີຂໍ້ຕິຕຽນ--ມີສິລທັມດີ
   - ການຄາດໝາຍໄວ້ກ່ອນ--ຕັດສິນໃຈໄວ້ລ່ວງໜ້າ
   - ໃຫ້ເປັນບຸດ--ໃຫ້ໄດ້ເປັນຜູ້ຮັບມໍຣະດົກນຳພໍ່ແມ່ໃໝ່
   - ການໄຖ່--ເຮັດໃຫ້ມີອິສຣະພາບ.

7. ຄຳຖາມ: ເປັນຫຍັງພຣະເຈົ້າຈຶ່ງຊົງທຸ້ມເທຄວາມຮັກແລະການອະພັຍໂທດໃຫ້ພວກເຮົາ? ເປັນຫຍັງພຣະເຈົ້າຈຶ່ງຊົງເລືອກພວກເຮົາໄວ້ຕັ້ງແຕ່ກ່ອນການທີ່ຈະຊົງວາງຮາກສ້າງໂລກ? ອ່ານພຣະຄຳຂໍ້ 1:9-10 ໃຫ້ທຸກຄົນໄດ້ຍິນ. ບອກ ໃຫ້ນັກຮຽນຮູ້ວ່າເຣື່ອງຫລາຍຢ່າງກ່ຽວກັບພຣະເຈົ້າ ແລະແຜນຫລາຍແນວຂອງພຣະອົງຍັງເປັນຄວາມລັບສຳລັບ ພວກເຮົາ. ເອຊາຢາ 55:8 ບອກພວກເຮົາວ່າທາງຂອງພຣະເຈົ້າ ແລະຄວາມນຶກຄິດຂອງພຣະເຈົ້າແຕກຕ່າງກັບທາງ ແລະຄວາມນຶກຄິດຂອງພວກເຮົາ. ພຣະເຈົ້າຍັງມີຄວາມເລິກລັບຫລາຍຢ່າງທີ່ຈະເປີດເຜີຍໃຫ້ພວກເຮົາຮູ້.

8. ສະລຸບບົດຮຽນໂດຍການອະທິບາຍວ່າການເປີດເຜີຍຂອງພຣະເຈົ້ານັ້ນມີຄວາມສຳຄັນຫລາຍ. ອ່ານ 1:11-14 ໃຫ້ທຸກຄົນໄດ້ຍິນ. ຊີ້ໃຫ້ເຫັນວ່າ ຜ່ານທາງພຣະຄຣິດພວກເຮົາໄດ້ຖືກເລືອກໄວ້, ພວກເຮົາໄດ້ຖືກຄາດໝາຍໄວ້ກ່ອນ, ພວກເຮົາໄດ້ຮັບການໄຖ່, ພວກເຮົາໄດ້ໃຫ້ເປັນບຸດ, ພວກເຮົາໄດ້ເປັນຜູ້ບໍຣິສຸດ, ແລະພວກເຮົາບໍ່ໄດ້ມີຂໍ້ຕິຕຽນ. ພວກ ເຮົາໄດ້ເຂົ້າຮ່ວມກັບພຣະຄຣິດ, ໄດ້ເປັນນຶ່ງໃນພຣະຄຣິດ, ໄດ້ຮັບຄວາມລອດໃນພຣະຄຣິດ, ໄດ້ຖືກປະທັບຕາໄວ້, ແລະ ຖືກຮັບປະກັນວ່າຈະໄດ້ຮັບມໍຣະດົກ. ສິ່ງເຫລົ່ານີ້ເກີດຂຶ້ນໄດ້ແນວໃດ? ເພື່ອພວກເຮົາແລະທຸກສິ່ງທີ່ໄດ້ຖືກສ້າງໄວ້ໃນ ຟ້າສວັນແລະແຜ່ນດິນໂລກກໍຈະໄດ້ສັຣເສີນພຣະກຽດຕິຍົດຂອງພຣະເຈົ້າ.

ນຳບົດຮຽນໄປໃຊ້ກັບຊີວິດ (ໃຊ້ເວລາ 15 ນາທີ)

9. ຊັກຊວນໃຫ້ນັກຮຽນທຸກຄົນພິຈາຣະນາວ່າ ຄວາມຈິງໃນພຣະທັມມີຄວາມໝາຍແນວໃດສຳລັບຊີວິດຂອງເຂົາເຈົ້າ. ຄຳຖາມ: ຖ້າພວກເຮົາແບ່ງຊີວິດຂອງເຮົາອອກເປັນ ສີ່ພາກເຊັ່ນ--ບ້ານ, ວຽກງານ, ໂບດ, ແລະສັງຄົມ--ແມ່ນ ຫຍັງແດ່ຈະເປັນສ່ວນປະກອບໃນພາກຕ່າງໆ? (ຕົວຢ່າງ: ສາມີ / ພັຣຍາ, ລູກ, ການເງິນ, ຄວາມສັມພັນ, ອຸປນິສັຍ ເຣື່ອງວຽກງານ, ກັມມະການ, ການມາ, ການຖວາຍ, ການຕຶກປາ, ການລ້າສັດ, ເພື່ອນບ້ານ, ແລະຕໍ່ໆໄປ). ຄຳຖາມ: ຖ້າພວກເຮົາເອົາພາກນື່ງຂອງຊີວິດໃຫ້ພຣະຄຣິດຄວບຄຸມ ແລ້ວແມ່ນຫຍັງຈະເກີດຂື້ນ? ສິ່ງນີ້ຈະປ່ຽນແປງການສັຣເສີນພຣະເຈົ້າຂອງທ່ານ ຫລື ຜູ້ໃດຜູ້ນື່ງບໍ່? ຈະປ່ຽນແປງແນວໃດ?

10. ປິດການສຶກສາພຣະທັມດ້ວຍການອະທິຖານ ຂໍໃຫ້ພຣະເຈົ້າຊົງຊ່ວຍທຸກຄົນໃນຫ້ອງຮຽນໃຫ້ໄດ້ດຳເນີນຊີວິດ ຕາມ ພຣະປະສົງຂອງພຣະເຈົ້າສຳລັບພວກເຂົາໃນອາທິດຈະມານີ້.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 8</u>
# <u>ພົ້ນເພື່ອຊີວິດໃຫມ່</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເອເຟໂຊ 2:1-16

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ເອເຟໂຊ 2

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເວລາພວກເຮົາຕອບຮັບພຣະຄຸນຂອງພຣະເຈົ້າດ້ວຍຄວາມເຊື່ອ, ພຣະອົງປະທານຊີວິດໃຫມ່ໃຫ້ພວກເຮົາຜ່ານອົງພຣະຄຣິດ.

<u>ຄຳຖາມເພື່ອການສຳຣວດ:</u> ພວກເຮົາໄດ້ຖືກຊ່ອຍໃຫ້ພົ້ນວິທີໃດ, ແລະຄວາມພົ້ນສ້າງຄວາມແຕກຕ່າງຫຍັງແດ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍວ່າຄວາມພົ້ນເກີດຂື້ນໄດ້ຢ່າງໃດ ແລະ ຄວາມພົ້ນຈະນຳຄວາມແຕກຕ່າງແນວໃດແດ່ມາສູ່ຊີວິດເຮົາ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ຖາມນັກຮຽນວ່າພວກເຂົາເຈົ້າເຄີຍຄິດບໍ່ວ່າໃບ "ຂ່າວມໍຣະນາກັມ" ຫລື ໃບຄຳຈາລຶກ ຂອງເຂົາເຈົ້າຈະມີຫຍັງແດ່. ບອກທຸກຄົນວ່າພວກເຮົາແຕ່ລະຄົນຕ່າງກໍມີຄຳຈາລຶກດ້ານຈິດວິນຍານກັນທຸກໆຄົນ ແລະການສຶກສາພຣະຄຳ ໃນມື້ນີ້ຈະໃຫ້ໂຄງຮ່າງໃນເຣື່ອງນີ້. ການສຶກສາພຣະທັມໃນພາກນີ້ຈະເວົ້າເຖິງຊີວິດຕອນທີ່ຍັງບໍ່ໄດ້ເປັນຄຣິສຕຽນແລະ ຊີວິດຫລັງຈາກທີ່ເປັນຄຣິສຕຽນແລ້ວ. ຊັກຊວນນັກຮຽນໃຫ້ຄິດເຖິງຄຳຈາລຶກທາງຈິດວິນຍານຂອງເຂົາໃນຂນະທີ່ ພວກເຮົາພິຈາຣະນາຂໍ້ພຣະຄຳຕໍ່ໄປນີ້.

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

2. ບອກນັກຮຽນວ່າ ພຣະທັມເອເຟໂຊ 2 ຈະພິສູດເບິ່ງເຫດການຕ່າງໆທີ່ແຍກພວກເຮົາໄວ້ໃນພຣະຄຣິດເພື່ອຊີວິດຂອງພວກເຮົາຈະໄດ້ນຳການສັລເສີນ ແລະພຣະກຽດມາໃຫ້ພຣະອົງ. ແນະນຳບົດຮຽນໂດຍໃຊ້ <u>ຄຳນຳ</u>ໃນບົດຮຽນນີ້.

3. ອ່ານ ເອເຟໂຊ 2:1-3 ໃຫ້ທຸກຄົນໄດ້ຍິນນຳ. ບັນລະຍາຍຊີວິດກ່ອນການເປັນຄຣິສຕຽນ. ຂໍໃຫ້ນັກຮຽນຂີດກ້ອງຄຳເວົ້າທີ່ເວົ້າເຖິງສະພາບຕ່າງໆຂອງເຮົາໃນລະຫວ່າງທີ່ພວກເຮົາຍັງຕາຍຢູ່ໃນຄວາມບາບ, ("ເມື່ອກ່ອນພວກທ່ານ ເຄີຍດຳເນີນຢູ່ໃນຄວາມບາບນັ້ນ," "ຕາມວິທີຂອງໂລກ," "ຕາມເຈົ້ານາຍແຫ່ງຍ່ານອາກາດ ຄືວິນຍານທີ່ຄອບຄອງຢູ່ໃນຄົນທັງຫລາຍທີ່ບໍ່ເຊື່ອຟັງ," "ເຄີຍດຳເນີນຊີວິດຕາມຕັນຫາຂອງຝ່າຍມະນຸດທັມມະດາ," "ດຳເນີນໄປຕາມຄວາມ ປາຖນາຂອງຮ່າງກາຍແລະຂອງຈິດໃຈ," "ຄວນຖືກພຣະພິໂຣດ"). ໃຫ້ອາສາສມັກຜູ້ນຶ່ງແບ່ງປັນສິ່ງທີ່ລາວໄດ້ຂີດ ກ້ອງໄວ້. ໃນທ້າຍສຸດບອກກັບທຸກຄົນວ່າ "ແຕ່ວ່າ!"

4. ຕຽມຕົວທີ່ຈະລື້ມບົດຮຽນທີ່ຜ່ານມາຄືນໃຫ້ນັກຮຽນຟັງ ໂດຍສະເພາະໃນສິ່ງທີ່ໄດ້ຮຽນມາເຊັ່ນວ່າ ກ່ອນການສ້າງໂລກພຣະເຈົ້າໄດ້ຊົງຮັກ, ຊົງໄຖ່, ຊົງອະພັຍ, ແລະ ຊົງຫຸ້ມເທພຣະຄຸນໃຫ້ພວກເຮົາ. ບອກທຸກຄົນວ່າເພາະຂອງພຣະ ປະທານນີ້, ພວກເຮົາຈິ່ງສາມາດມີຄວາມຍິນດີໃນຊີວິດທີ່ຈະມາຫລັງຈາກຄວາມຕາຍ.

5. ໃຫ້ນັກຮຽນຄົນນຶ່ງອ່ານ ເອເຟໂຊ ໒:4-10. ບອກໃຫ້ນັກຮຽນແຕ່ລະຄົນຂີດກ້ອງຄຳເວົ້າທີ່ຊີ້ແຈງເຖິງສະພາບຂອງ ພວກເຮົາເວລາເຮົາໄດ້ມີຊີວິດໃຫມ່ຝ່າຍຈິດວິນຍານແລ້ວ ("ຊົງບັນດານໃຫ້ເຮົາມີຊີວິດຢູ່ກັບພຣະຄຣິດ," "ໂຜດໃຫ້ ພົ້ນ," "ບັນດານໃຫ້ເຮົາເປັນຄືນມາດ້ວຍກັນກັບພຣະອົງ," "ໃຫ້ເຮົານັ່ງໃນສວັນສະຖານດ້ວຍກັນກັບພຣະເຢຊູຄຣິດ," "ພຣະຄຸນ," "ເຮົາທັງຫລາຍເປັນສິພຣະຫັດຂອງພຣະອົງ"). ເຊີນໃຫ້ບາງຄົນແບ່ງປັນສິ່ງທີ່ເຂົາເຈົ້າໄດ້ຂີດກ້ອງໄວ້.

6. ເບິ່ງພຣະຄຳຂໍ້ ໒:8-10 ອີກເທື່ອນຶ່ງ; ຊີ້ໃຫ້ທຸກຄົນເຫັນພຣະຄຳທີ່ບອກເຖິງສິ່ງທີ່ເກີດຂື້ນເພາະພຣະຄຸນຂອງພຣະເຈົ້າ ເພາະພວກເຮົາຕອບສນອງພຣະອົງດ້ວຍຄວາມເຊື່ອ. ໃຊ້ຄຳອະທິບາຍໃນບົດຮຽນເພື່ອຊ່ວຍໃນການສລຸບ.

7. ເວົ້າເຣື່ອງບັນຫາແລະຄວາມສັບສົນຕ່າງໆທີ່ກຳລັງເກີດຂຶ້ນໃນໂລກ,ໂດຍສະເພາະບັນດາປະເທດທີ່ກຳລັງມີການຕໍ່ສູ້ກັນຢູ່ໃນປັດຈຸບັນ. ຊີ້ໃຫ້ທຸກຄົນໄດ້ເຫັນອຸປສັກຫລາຍໆຢ່າງທີ່ເຮັດໃຫ້ມະນຸດຕ້ອງຫ່າງໄກຈາກພຣະເຈົ້າເພີ້ມທະວີຂື້ນ. ບອກທຸກຄົນວ່າ ຄວາມຮັກຂອງພຣະເຈົ້າສາມາດເອົາຊະນະອຸປສັກທຸກຢ່າງ. ອ່ານພຣະຄຳຂໍ້ ໒:11-16, ຊວນ ໃຫ້ນັກຮຽນໄດ້ຫລັບຕາແລະຂອບພຣະຄຸນພຣະເຈົ້າສຳລັບຂອງປະທານ ຊຶ່ງຊ່ວຍໃຫ້ພວກເຂົາເຈົ້າໄດ້ເຂົ້າໃກ້ພຣະອົງ ແລະໃຫ້ພວກເຂົາໄດ້ເປັນນຶ່ງໃນພຣະເຈົ້າ.

<u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

8. ແບ່ງປັນຄຳຈາລຶກຝ່າຍຈິດວິນຍານຂອງທ່ານໃຫ້ນັກຮຽນຟັງເຊັ່ນ: ຊີວິດຂອງທ່ານກ່ອນມາຮູ້ພຣະຄຣິດ, ທ່ານມາຮັບພຣະຄຣິດວິທີໃດ, ແລະມີສິ່ງໃດແດ່ທີ່ພຣະຄຣິດໄດ້ປ່ຽນແປງໃນຊີວິດຂອງທ່ານ .ໃຫ້ນັກຮຽນຄົນອື່ນໆແບ່ງປັນໃນ ເຣື່ອງດຽວກັນ. ໃຫ້ທຸກຄົນກົ້ມຫົວຫລັບຕາແລະຄຳນຶງເຖິງປະສົບການສ່ວນຕົວຂອງໃຜລາວ. ເຊີນທຸກຄົນໃຫ້ຮັບເອົາ ຄວາມພົ້ນທີ່ພຣະເຈົ້າຊົງປະທານໂດຍການຍອມຮັບເຊື່ອພຣະເຢຊູຄຣິດ ຖ້າເຂົາເຈົ້າຍັງບໍ່ເຄີຍໄດ້ຮັບພຣະອົງເທື່ອ. ຫລັງ ຈາກການອະທິຖານແລ້ວ, ເຊີນຜູ້ທີ່ຮັບພຣະຄຣິດໃນມື້ນີ້ ໃຫ້ເລົ່າເຖິງສິ່ງເຂົາເຈົ້າໄດ້ເຮັດ. ຊ່ວຍແນະນຳຜູ້ເຊື່ອໃຫມ່.

## <u>ຄຳແນະນຳສຳລັບຄຣູສອນ</u>
## <u>ບົດຮຽນທີ 9</u>
## <u>ສິ່ງທີ່ພຣະເຈົ້າຕ້ອງການ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເອເຟໂຊ 3:14-21
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ເອເຟໂຊ 3
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຊົງມີພຣະປະສົງໃຫ້ພວກເຮົາໄດ້ພົບກັບ ກຳລັງ, ຄວາມພໍໃຈ, ຄວາມຮັກ, ຄວາມ ໃກ້ຊິດ ແລະ ຄວາມສັມພັນອັນເຂັ້ມແຂງ ຢູ່ໃນພຣະອົງ ຊຶ່ງຄວາມເຊື່ອໃນອົງ ພຣະຄຣິດໄດ້ນຳມາໃຫ້.
<u>ຄຳຖາມເພື່ອການສຳຣວດ:</u> ພຣະເຈົ້າຊົງຕ້ອງການສິ່ງໃດສຳລັບທ່ານ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສຳຣວດເບິ່ງຄວາມຕ້ອງການຂອງທ່ານສຳລັບຕົນເອງແລະຄົນອື່ນໆໃນຄຳອ້ອນ ວອນຂອງໂປໂລ.

### <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ເລີ່ມການຮຽນໂດຍຕັ້ງຄຳຖາມດັ່ງນີ້: ທ່ານເປັນຄົນມັກເຮັດບັນຊີບໍ່? ມີຫຍັງແດ່ຢູ່ໃນບັນຊີຂອງທ່ານ? (ລາຍການ ອາຫານ, ສິ່ງທີ່ຕ້ອງເຮັດ, ກິຈການປະຈຳວັນ, ນ້ຳເບີໂທຣະສັບສຳລັບເວລາສຸກເສີນ, ແລະຕໍ່ໆໄປ).

2. ນຳນັກຮຽນເຂົ້າສູ່ການສຶກສາພຣະທັມໂດຍບອກວ່າ ເວລາໂປໂລອະທິຖານ ເພິ່ນຈະມີບັນຊີລາຍຊື່ທີ່ຈະຕ້ອງອະທິ ຖານເພື່ອ. ພານັກຮຽນຂຽນບັນຊີເພື່ອຈະອະທິຖານໃສ່ກະດານ. ພິຈາຣະນາເບິ່ງລາຍການນັ້ນ ແລ້ວແນະນຳໃຫ້ ນັກຮຽນພາກັນປຽບທຽບເບິ່ງວ່າ ການຮ້ອງຂໍຕ່າງໆນັ້ນຈະກົງກັບລະບົບແລະເນື້ອໃນໃຈຄວາມຂອງຄຳອະທິ ຖານຂອງ ໂປໂລ ໃນ ເອເຟໂຊ 3:14-21 ບໍ່.

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

3. ໃຫ້ບົດນຳສຳລັບບົດຮຽນໂດຍໃຊ້ ຄຳອະທິບາຍຢູ່ໃນຫົວຂໍ້ "ເພາະເຫດນີ້." ໃຊ້ໂອກາດນີ້ເພື່ອຍ້ອນກັບໄປເວົ້າເຖິງ ຈຸດສຳຄັນຢູ່ໃນບົດຮຽນ 7 ແລະ 8 ທີ່ຜ່ານມາເລັກນ້ອຍ.

4. ໃຫ້ນັກຮຽນຄົນນຶ່ງອ່ານ ເອເຟໂຊ 3:14-19. ບອກໃຫ້ທຸກຄົນສັງເກດເບິ່ງສິ່ງຕ່າງໆທີ່ໂປໂລກຳລັງອະທິຖານໃນ ຂໍ້ພຣະຄຳເຫລົ່ານີ້. ຂຽນຄຳເວົ້າຕໍ່ໄປນີ້ໃສ່ກະດານແລ້ວໃຊ້ຄຳບັລຍາຍໃນບົດຮຽນເພື່ອອະທິບາຍເພີ້ມເຕີມ:

   - ເຫດຜົນທີ່ຕ້ອງອະທິຖານ (3:14-19)
     "ເພາະເຫດນີ້"
     "ຂ້າພະເຈົ້າຈຶ່ງຄຸເຂົ່າລົງ"

"ຂອງທຸກຄອບຄົວ"

- ຄຳອ້ອນວອນເພື່ອກຳລັງຝ່າຍຈິດໃຈ (3:16)
  - "ກຳລັງຝ່າຍພາຍໃນ"
  - "ທ່ານ" (ທັງຫລາຍ)
  - "ກຳລັງໂດຍຣິດເດດເຂອງພຣະວິນຍານ"
- ຄຳອ້ອນວອນເພື່ອພຣະຄຣິດຈະຊົງຕັ້ງຢູ່ໃນໃຈ (3:17)
  - "ໃນໃຈຂອງທ່ານ"
  - "ວາງຮາກລົງ"
  - "ຫມັ້ນຄົງ"
- ຄຳອ້ອນວອນເພື່ອຄວາມຮັກ (3:18-19)
  - "ຄວາມເຂົ້າໃຈ"
  - "ເກີນຄວາມຮູ້"
  - "ຮັບຄວາມເຕັມບໍຣິບູນຂອງພຣະເຈົ້າ"
  - "ຄວາມກວ້າງ, ຄວາມຍາວ, ຄວາມສູງ, ຄວາມເລິກ"

5. ໃຫ້ນັກຮຽນຄົນນຶ່ງອ່ານ 3:20-21 ໃຫ້ທຸກຄົນຟັງ. ບອກໃຫ້ນັກຮຽນພຍາຍາມຟັງວ່າພຣະເຈົ້າຈະເວົ້າກັບພວກເຮົາເວລາພວກເຮົາອະທິຖານ. ຂຽນຄຳເວົ້າຕໍ່ໄປນີ້ໃສ່ກະດານແລ້ວອະທິບາຍໂດຍໃຊ້ບົດຮຽນຊ່ວຍ:

   ເພື່ອສັຣເສີນພຣະເຈົ້າ (3:20-21)
   - "ຣິດອຳນາດທີ່ກຳລັງດຳເນີນຢູ່"
   - "ສາມາດກະທຳ"

<u>ນຳບົດຮຽນໄປໃຊ້ກັບຊີວິດ</u> (ໃຊ້ເວລາ 15 ນາທີ)

6. ຄິດເຖິງຄຳທຸກຄຳທີ່ໂປໂລໃຊ້ໃນການອະທິຖານຂອງເຂົາເພື່ອບັລຍາຍເຖິງຄວາມຮັກ ແລະກຳລັງ ທີ່ພຣະເຈົ້າຊົງປະທານ ວ່າຄຳເຫລົ່ານັ້ນບອກໃຫ້ພວກເຮົາຮູ້ວ່າ ພວກເຮົາສາມາດຫມັ້ນໃຈບໍ່ວ່າພຣະເຈົ້າຈະຊົງໄດ້ຍິນ ແລະຈະຊົງຕອບ ຄຳອ້ອນວອນ? (ເບິ່ງ 3:20). ຂຽນລາຍການອະທິຖານເພື່ອໃສ່ກະດານ (ເພີ້ມຈາກລາຍການທີ່ທ່ານໄດ້ຂຽນໄວ້ແລ້ວ ໃນຂໍ້ 2).

7. ອ່ານ 3:20-21 ໃຫ້ທຸກຄົນໄດ້ຍິນ; ປິດການສຶກສາພຣະທັມມື້ນີ້ດ້ວຍການອະທິຖານເພື່ອທຸກຢ່າງທີ່ໄດ້ຂຽນໄວ້ໃນກະດານແລ້ວນັ້ນ.

# ບົດແນະນຳການສິດສອນ

# ບົດຮຽນທີ 10

# ຈະຊອກຫາໜ້າທີ່ຢ່າງໃດໃນຄຣິສຕະຈັກ?

---

ຂໍ້ພຣະຄັມພີສຳຫລັບບົດຮຽນນີ້: ເອເຟໂຊ 4:1-16

ຂໍ້ພຣະຄັມພີສຳຫລັບເບື້ອງຫລັງ: ເອເຟໂຊ 4:1-16

ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຕ້ອງການຢາກນຳພາຊີວິດຂອງພວກເຮົາໃຫ້ມີຊີວິດທີ່ດີ ສົມກັບຄຳທີ່ວ່າເປັນ ຄຣິສຕຽນ, ຝຶກຝົນຂອງພຣະຣາຊທານ ທີ່ມີຢູ່ເພື່ອເສີມສ້າງຄຣິສຕະຈັກ ແລະສັນຍາວ່າ ຈະຮັບໃຊ້ທຸກຢ່າງຕາມທີ່ພຣະອົງ ຊົງຮຽກຮ້ອງຕ້ອງການ.

ຄຳຖາມເພື່ອການສຳຫລວດ: ປັດຈຸບັນນີ້ ທ່ານກຳລັງເຮັດ ສິ່ງທີ່ພຣະເຈົ້າຕ້ອງການໃຫ້ທ່ານເຮັດຫລືບໍ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ຊີ້ໃຫ້ເຫັນ ໜົນທາງ ທີ່ພຣະເຈົ້າຕ້ອງການນຳພາຊີວິດຂອງພວກເຮົາໄປສູ່ຊີວິດຄຣິສຕຽນທີ່ດີ ແລະ ເພື່ອຈະໄດ້ເສີມສ້າງຄຣິສຕະຈັກ.

## ແຜນການສອນ

ຊີວິດສະພາບຕົວຈິງ:

1. ເລົ່າເຣື່ອງທີ່ບັລຍາຍໄວ້ໃນບົດຮຽນ (ເຣື່ອງຄົນບັບຕິສຫລົງຢູ່ໃນເກາະ) ອ່ານໃຫ້ເຂົ້າໃຈຄັກໆ ແລ້ວເລົ່າໃຫ້ລະອຽດຈະແຈ້ງ (ຢ່າອ່ານ)

ນຳພາການສອນ:

2. ກ່ອນຈະສຶກສາ, ຄຣູຕ້ອງຂຽນໃສ່ເຈັ້ຽ ໃຫ້ເປັນສາມແຜ່ນ ຕຽມໄວ້. ເວລາເຂົ້າຫ້ອງແລ້ວ ກໍໃຫ້ແບ່ງເປັນສາມໝວດ ຢາຍໝວດລະແຜ່ນ. ແຕ່ລະແຜ່ນໃຫ້ຂຽນດັ່ງນີ້:

- ແມ່ນຫຍັງຄືຊີວິດທັງໝົດ? ເອເຟໂຊ ບົດນຶ່ງ
- ພວກເຮົາພົ້ນໄດ້ຢ່າງໃດ? ແລະ ຄວາມພົ້ນເຮັດໃຫ້ເຮົາມີຄວາມແຕກຕ່າງຫຍັງແດ່? ເອເຟໂຊ ບົດສອງ
- ພຣະເຈົ້າຕ້ອງການຫຍັງຈາກທ່ານ? ເອເຟໂຊ ບົດສາມ

3. ໃຫ້ແຕ່ລະໝວດຂຽນ ເປັນລຳດັບລຽງລົງມາ ແລ້ວເອົາໄປຕິດໃສ່ຝາໄວ້ (ໃຊ້ເວລາ 5 ນາທີ) ເອເຟໂຊບົດທີ 1 ຫາບົດທີ 3 ແມ່ນການເບິ່ງລວມ

4. ບົດທີ ສີ່ ຫາບົດທີ ຫົກ ແມ່ນການໄຈ້ແຍກເບິ່ງເລິກເຂົ້າໄປ ຫລືວ່າ ຂຍາຍໃຫ້ໃຫຽອອກ.

5. ອະທິບາຍ ວ່າ ໂປໂລມີຈຸດປະສົງຢາກໃຫ້ຄົນທີ່ອ່ານຈົດໝາຍຂອງລາວມີຊີວິດສົມກັບທີ່ຖືກເອີ້ນມາ ແລະ ກໍມາພ້ອມພາກັນເສີມສ້າງຄຣິສຕະຈັກຂຶ້ນ. (ພຣະກາຍຂອງພຣະຄຣິດ)

6. ຄຣູຈະອະທິບາຍໃຫ້ນັກຮຽນຮູ້ເຖິງຄວາມໝາຍທີ່ແຕກຕ່າງກັນ ແຕ່ວ່າແມ່ນພຣະວິນຍານອົງດຽວກັນ. ບໍ່ໄດ້ຖືກແບ່ງແຍກ ຫລື ແຕກກົກແຕກເຫລົ່າ.
"ຄວາມເປັນອັນນຶ່ງອັນດຽວກັນ" ໃຫ້ແຕ່ລະຄົນອອກຄວາມຄິດຄວາມເຫັນ ໃຫ້ຄວາມໝາຍ (Definition)

7. ໃຫ້ທຸກຄົນອ່ານຄືນອີກ (ອຟ 4:1-6) ອ່ານໃນໃຈ. ຖາມຄຳຖາມດັ່ງນີ້ ແລ້ວໃຫ້ນັກຮຽນຕອບດັງໆ:
- ໂປໂລກ່າວເຖິງຄຸນນະພາບຂອງຄຣິສຕຽນຢ່າງໃດ? ຂໍ້ 2 ແລະ 3
- ຄຳໃດທີ່ລາວເນັ້ນໜັກຫລາຍເທື່ອກວ່າໝູ່? ຄຳວ່າ "ດຽວ" ພາສາລາວຄຳວ່າ ດຽວ ນັ້ນບໍ່ຄ່ອຍມີຄວາມໝາຍ,ຕ້ອງຕື່ມຄຳນຳໜ້າ ເຊັ່ນ: ອັນດຽວ, ເທື່ອດຽວ, ຈອກດຽວ, ຄຳດຽວ..... ແມ່ນອັນນຶ່ງ, ຢູ່ດ້ວຍກັນ, ໄປດ້ວຍກັນ.... ບາງເຂດກໍຍັງເວົ້າວ່າ ໄປນຳດຽວ ດັ່ງນີ້ເປັນຕົ້ນ.

8. ຖາມຫ້ອງຮຽນ ເບິ່ງວ່າ ທ່ານມີຂອງພຣະຣາຊທານຫຍັງແດ່? ໃຫ້ນັກຮຽນສມັກໃຈຕອບ.

9. ຖາມນັກຮຽນ ຄຳຖາມຕໍ່ໄປນີ້ ແລ້ວຄຣູຈະຂຽນໃສ່ກະດານ.
- ແມ່ນໃຜໄດ້ຮັບຂອງພຣະຣາຊທານຝ່າຍຈິດວິນຍານ? (ທຸກໆຄົນທີ່ເຊື່ອ)
- ເວລາໃດພຣະວິນຍານບໍຣິສຸດເຂົ້າມາສະຖິດນຳພວກເຮົາ? (ເວລາເຮົາເກີດໃໝ່)
- ຂອງພຣະຣາຊທານອັນໃດສຳຄັນກວ່າໝູ່? (ສຳຄັນຄືກັນໝົດ)
- ຂອງພຣະຣາຊທານອັນໃດພິເສດ? (ພິເສດຄືກັນໝົດ)
- ແມ່ນໃຜເປັນຜູ້ເອົາຂອງພຣະຣາຊທານໃຫ້? (ພຣະວິນຍານບໍຣິສຸດ)
- ເປັນຫຍັງພຣະວິນຍານບໍຣິສຸດຈຶ່ງເອົາຂອງພຣະຣາຊທານນີ້ໃຫ້? (ເພື່ອເສີມສ້າງພຣະກາຍຂອງພຣະຄຣິດ) ອະທິບາຍໃນ (6:12-16) ຄຣິສຕຽນຕ້ອງການໆເຕີບໃຫຍ່ໃນຄຣິສຕະຈັກ.

10. ຖາມຄຳ ຖາມໝູນໃຈໃນ ເຈັ້ຽບົດຮຽນ ທັງສີ່ ຂໍ້. ແລ້ວໃຫ້ນັກຮຽນຕອບ ເພື່ອວັດແທກວ່າເຮົາຮຽນມາໄດ້ຜົນສ່ຳໃດ?

11. ນຳພາອະທິຖານປິດໂດຍຄຣູສອນ ຂໍໃຫ້ທຸກຄົນມີຄວາມເປັນອັນນຶ່ງອັນດຽວກັນ ຂໍໃຫ້ພຣະວິນຍານສະຖິດນຳພາທຸກໆຄົນ.

# ບົດແນະນຳການສິດສອນ
# ບົດຮຽນທີ 11
# ຈະເດີນຢ່າງໃດ ແລະຈະເວົ້າຢ່າງໃດ?

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອເຟໂຊ 4: 17- 15:11

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອເຟໂຊ 4: 17 ຫາ 5:20

ຈຸດສຳຄັນຂອງບົດຮຽນນີ້: ຄຣິສຕຽນຕ້ອງສຳແດງຊີວິດໃຫມ່ໃນພຣະຄຣິດ ໃນທຸກໆການກະທຳແລະ ທຸກໆ ການພົວພັນທີ່ເກີດຂື້ນໃນຊີວິດ.

ຄຳຖາມເພື່ອການສຳຫລວດ: ຄົນທັງຫລາຍຈະເຫັນຫຍັງໃນຕົວທ່ານ ເພື່ອເປັນເຄື່ອງຫມາຍວ່າທ່ານເປັນ ຄຣິສຕຽນ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ວຍທ່ານທັງຫລາຍໃຫ້ໃຊ້ຊີວິດຢ່າງຄຣິສຕຽນຢ່າງເຕັມສ່ວນ ແລະ ດ້ວຍ ຄວາມເຊື່ອຢ່າງແທ້ຈິງ

## ແຜນການສິດສອນ

### ສະພາບຊີວິດຕົວຈິງ

1. ຕຽມຄຳຖາມ: "ມີຈັກຄົນ ທີ່ເກີດໃຫມ່ຝ່າຍຈິດວິນຍານ ເທື່ອທຳອິດ ແລ້ວຮັບຮູ້ວ່າໂຕເອງເກີດໃຫມ່ໂລດ?" ໃຫ້ສອງສາມຄົນຕອບ. ຫລັງຈາກນັ້ນກໍໃຫ້ວາງຄຳຖາມຕໍ່ໄປອີກວ່າ: " ຖ້າດັ່ງນັ້ນເປັນຫຍັງຄົນຈຶ່ງຕັດ ສິນໃຈ ຮັບເຊື່ອໄວແທ້? ໃຫ້ນັກຮຽນຕອບ.

2. ເຕືອນຫ້ອງຮຽນ ວ່າອາທິດຜ່ານມາພວກເຮົາໄດ້ຮຽນ ກ່ຽວກັບການມີຫນ້າທີ່ໃນຄຣິສຕະຈັກ. ອາທິດນີ້ ຈະໄດ້ຮຽນ ເຣື່ອງຄຣິສຕຽນ ຄວນມີຄວາມສັມພັນສ່ວນຕົວຢ່າງໃດ.

### ນຳພາສຶກສາບົດຮຽນ

3. ເລົ່າເຣື່ອງ ສິດຍາພິບານ ເຮັດວຽກຢູ່ແຖບໂຮງເລື່ອຍໄມ້ (ຈາກບົດຮຽນ) ໂປໂລກ່າວວ່າ ຄວາມບາບ ແມ່ນສິ່ງນຶ່ງທີ່ທຳລາຍ ຄຳພະຍານຂອງຄຣິສຕຽນ, ທຳລາຍການດຳເນີນຊີວິດຂອງຄຣິສຕຽນ.

4. ໃຫ້ຄົນນຶ່ງອ່ານ ເອເຟໂຊ 4:17<u>-24 ເມື່ອອ່ານແລ້ວ ຄຣູຈະອະທິບາຍເພີ້ມເຕີມ</u> ແລະຊີ້ໃຫ້ເຫັນຊີວິດເກົ່າ ແລະຊີວິດໃຫມ່. ແລ້ວວາງຄຳຖາມຕໍ່ໄປນີ້: ຖ້າໂປໂລຂຽນຈົດຫມາຍ ທຸກວັນນີ້, ທ່ານຄິດວ່າຄົນຈະປ່ຽນ

ແປງຫລືບໍ່? ເປັນຫຍັງ?

5. ໃຫ້ຄຣູຊິດ ແບ່ງກະດານໃຫ້ເປັນສອງສ່ວນ, ສ່ວນທີນຶ່ງໃຫ້ຂຽນ ໃສ່ວ່າ "ເອົາອອກ" ສ່ວນທີ ສອງ ໃຫ້ຂຽນໃສ່ "ສວມໃສ່" ເມື່ອຂຽນເປັນທີ່ຮຽບຮ້ອຍແລ້ວ ໃຫ້ຄົນນຶ່ງຫລື ສອງຄົນ ອ່ານ 4:26-30 ເມື່ອອ່ານແລ້ວ ໃຫ້ພາກັນຕື່ມ ຂໍ້ຄວາມທີ່ສໍາຄັນໃສ່ (ໃຫ້ນັກຮຽນໃຫ້ຄວາມຄິດຄວາມເຫັນ) (ຄວາມຮ້າຍ, ຄວາມສັດຊື່, ຄໍາເວົ້າ.)

6. ຕໍ່ໄປໃຫ້ນັກຮຽນອ່ານອີກ 4:31-32 ແບ່ງປັນແນວຄິດຮ່ວມກັນອີກ ໂດຍອີງໃສ່ການປະຕິບັດດ້ວຍ.

7. ຄຣູເປັນຄົນອ່ານ 5:1-7 ໃຫ້ນັກຮຽນ ເຄິ່ງຫ້ອງຟັງເອົາ ການສະລະຊີວິດຂອງພຣະຄຣິດ ແລະ ອີກເຄິ່ງຫ້ອງ ໃຫ້ຟັງເອົາການກະທໍາຂອງມະນຸດ. ຖາມນັກຮຽນວ່າ: ແມ່ນຫຍັງຄືຄວາມຫມາຍຂອງ ອາກາເປ?

8. ຂໍ້ 8-14 ໂປໂລໄດ້ສົມທຽບ ໃຫ້ທ່ານເຫັນເຖິງຊີວິດ ຂອງຄວາມສວ່າງ ແລະ ຄວາມມືດ. ຄຣູ ຈະອະທິບາຍໄປຕາມເຈັ້ຽ ບົດຮຽນກໍໄດ້.

9. ອ່ານ ຂໍ້ 5:15-20 (ອ່ານຊ້າໆ ແລະຈະແຈ້ງ) ແລ້ວຖາມວ່າ: ຄຣິສຕະຈັກຂອງພວກເຮົາເຕເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດຫລືບໍ່ ? ຖ້າຍັງບໍ່ເຕັມ, ທ່ານຄວນເຮັດຢ່າງໃດ,ໂດຍສ່ວນຕົວ, ເພື່ອຊ່ວຍຄຣິສຕະຈັກ ໃຫ້ມີການປ່ຽນແປງ?

<u>ຫນູນໃຈໃຫ້ມີການກະທໍາ:</u>

10. ຖາມນັກຮຽນ ໃນການເດີນຂອງເຂົາເຈົ້າ ແຕ່ໃຫ້ຕອບໃນໃຈ. ເຂົາເຈົ້າກໍາລັງເດີນໃນຝ່າຍໃດ? ມີສິ່ງໃດແດ່ທີ່ຈະປ່ຽນແປງ ໃຫ້ມາເດີນຝ່າຍຄວາມສວ່າງໄດ້.

11. ໂປໂລສອນໃຫ້ພວກເຮົາຮູ້ວ່າ ການສິດສອນນີ້ ຈະຕ້ອງມີການກະທໍາໄປດ້ວຍ. ຄຣິສຕຽນຄວນເດີນ ແລະ ກ້າວໃນການເປັນຕົວຢ່າງສເມີ

12. ນໍາພານັກຮຽນ ອະທິຖານ ຂໍພຣະເຈົ້າຊົງນໍາໃນການທີ່ຈະດໍາເນີນໃນຊີວິດຄຣິສຕຽນ. ແລະອະທິຖານໃຫ້ຄຣູກາຍເປັນຕົວຢ່າງໃນການນີ້ດ້ວຍ.

# ບົດແນະນຳການສິດສອນ
# ບົດຮຽນທີ 12
# ຈະເຮັດໃຫ້ເປັນຄອບຄົວຄຣິສຕຽນຢ່າງໃດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອເຟໂຊ 5:21 ຫາ 6:4

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອເຟໂຊ 5: 15 ຫາ 6: 9

ຈຸດສຳຄັນຂອງບົດຮຽນນີ້: ໃຊ້ຊີວິດຄຣິສຕຽນດ້ວຍຄວາມເຊື່ອໃນຄອບຄົວຮຽກຮ້ອງໃຫ້ເຮົາມີການໂຄ ຣົບຊຶ່ງກັນແລະກັນ ພາຍໃຕ້ການນຳພາຂອງພຣະຄຣິດ.

ຄຳຖາມເພື່ອການສຳຫລວດ: ແມ່ນຫຍັງຄືຄວາມແຕກຕ່າງ ທີ່ພຣະເຢຊູ ເຮັດໃຫ້ມີ ຄວາມສັມພັນໃຫມ່ ໃນຄອບຄົວ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຢາກຊີ້ແນະໃຫ້ເຫັນເສັ້ນທາງ ພາຍໃຕ້ການນຳພາຂອງພຣະຄຣິດວ່າຄອບ ຄົວຂອງພວກເຮົາ ມີຄວາມແຕກຕ່າງໃນຄວາມສັມພັນ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຄຣູຊອກຫາ ຫນັງສືພິມ, ຫລື ປຶ້ມ ຫລື ຂ່າວໃຫມ່ໆສົດໆ ກ່ຽວກັບຄອບຄົວ ມາເພື່ອປະກອບການສິດ ສອນ. ຖາມນັກຮຽນ ມີໃຜເຄີຍໄດ້ຍິນບັນຫາກ່ຽວກັບຄອບຄົວຫລືບໍ່? ໃຫ້ເວົ້າສັ້ນໆ ມາໃຫ້ຟັງ.

2. ໃນເອເຟໂຊ ບົດທີ 4 ອາທິດຜ່ານມາ ໂປໂລສອນໃຫ້ຮູ້ຈັກການດຳເນີນຊີວິດ ຢ່າງຄຣິສຕຽນ, ການວາງ ໂຕໃນຄຣິສຕະຈັກ. ໃນອາທິດນີ້ພວກເຮົາຈະມາເວົ້າເຣື່ອງຄອບຄົວໂດຍສະເພາະ.

### ສຶກສາບົດຮຽນ

3. ໃຫ້ນັກຮຽນອ່ານ ເອເຟໂຊ 5:2 ແລະ 5:21 ພຣະຄັມພີ ສອງຂໍ້ນີ້ກ່າວຢ່າງໃດ? ໃຫ້ຫລາຍຄົນອອກຄວາມ ຄິດ ຄວາມເຫັນ.

4. ອ່ານຂໍ້ພຣະຄັມພີ ອຟ 5:22-33 ອະທິບາຍໃນເຈັ້ຽບົດຮຽນ. ການແຕ່ງງານບໍ່ໄດ້ແມ່ນທີບ ທີ່ເຕັມໄປດ້ວຍ ສິ່ງທີ່ດີທັງຫມົດ. ແຕ່ແມ່ນທີບທີ່ ເຮົາຄວນຂົນອັນບໍ່ດີອອກ ແລະເອົາສິ່ງທີ່ເຫັນວ່າດີທັງສອງຝ່າຍເຂົ້າໃສ່.

5. ຂຽນບັນຊີລົງໄປວ່າ ມີຫຍັງແດ່ທີ່ເຮັດໃຫ້ການແຕ່ງງານເຕີມແມ່ນແລ່ນສະດວກ. ຄຣູອາດຈະອະທິບາຍ ເຖິງ ການຢູ່ໃຕ້ບັງຄັບ, ແລະການເປັນສີສະຂອງສາມີ.

6. ອະທິບາຍເຖິງຄຸນລັກສະນະຂອງຄອບຄົວຂອງຄຣິສຕຽນ ຣະຫວ່າງສາມີພັຣຍາ ຈະມີຢູ່ໃນທີ່ນີ້ເທົ່ານັ້ນ. ຫລັງຈາກຄຣູ ອະທິບາຍແລ້ວໃຫ້ນັກຣຽນ ອ່ານໃນໃຈອີກ ງຽບໆ. ໃຫ້ແຕ່ລະຄົນມາຂຽນໃສ່ກະດານວ່າ ໜ້າທີ່ຂອງເມັຽມີຫຍັງແດ່. ແລະໃຫ້ຂຽນໜ້າທີ່ຂອງສາມີດ້ວຍ.

7. ໃຫ້ຄົນນຶ່ງອ່ານ ເອເຟໂຊ 6:1-4 ໃຫ້ແຕ່ລະຄົນໃນຫ້ອງຮຽນອ່ານ ໂກໂລຊາຍ 3:20 ໂຣມ 1:29-31 2 ຕີໂມທຽວ 3:2 ອົພຍົບ 20:12 ພຣະບັນຍັດສອງ 6:5-7. ແລ້ວ ກໍອະທິບາຍໄປວ່າຖ້ອຍຄຳໃນຂໍ້ພຣະ ຄັມພີນີ້ ສຳຄັນຫຍັງແດ່ໃນການພົວພັນຣະຫວ່າງພໍ່ແມ່ ແລະລູກ.

<u>ໜູນໃຊ້ໃນການກະທຳ</u>

8. ທ່ານມີຄວາມຮູ້ສຶກຢ່າງໃດກ່ຽວຂໍ້ພຣະຄຳຕ່າງໆເຫລົ່ານີ້ ເຊີນໃຫ້ທຸກຄົນກ່າວ ຕາມແນວຄິດ ແລະຕາມ ຄວາມເປັນຈິງຂອງຄອບຄົວ. ຄອບຄົວແລະຄຣິສຕະຈັກມີການພົວພັນກັນບໍ່? ຕົວຢ່າງ ໃຫ້ທຸກຄົນຕອບ ໄດ້. ເຮົາຄວນປັບປຸງຄອບຄົວເຮົາຢ່າງໃດ?

9. ນຳພາອະທິຖານໃຫ້ພຣະເຈົ້າຊົງນຳຄອບຄົວຄຣິສຕຽນ ທຸກໆຄອບຄົວໃຫ້ເປັນຄອບຄົວຕົວຢ່າງ.

# <u>ບົດແນະນຳການສິດສອນ</u>
# <u>ບົດຮຽນທີ 13</u>
# <u>ຈະເປັນຄຣິສຕຽນຢ່າງໃດໃນເມື່ອ ບໍ່ແມ່ນຂອງງ່າຍ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເອເຟໂຊ 6: 10- 20

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ເອເຟໂຊ 6: 10-20

<u>ຈຸດສຳຄັນຂອງບົດຮຽນນີ້:</u> ໃຊ້ຊີວິດຄຣິສຕຽນດ້ວຍຄວາມເຊື່ອເພື່ອຈະຕໍ່ສູ້ກັບມານຊາຕານ

<u>ຄຳຖາມເພື່ອການສຳຫລວດ:</u> ແມ່ນຫຍັງຄືອາວຸດທີ່ ພວກເຮົາຈະໃຊ້ຕໍ່ຕ້ານມານຊາຕານ

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຢາກຊີ້ແນະໃຫ້ເຫັນວ່າ ອາວຸດທີ່ພຣະເຈົ້າຈັດຕຽມໃຫ້ຄຣິສຕຽນນັ້ນ ເປັນອາວຸດຊະນິດດຽວທີ່ຈະຕໍ່ຕ້ານກັບມານໄດ້

## <u>ແຜນການສິດສອນ</u>

### <u>ສະພາບຊີວິດຕົວຈິງ</u>

1. ຫລິ້ນເກມ: ແບ່ງຫ້ອງອອກເປັນສອງທີມ. ໃຫ້ຄຣູເປັນຜູ້ກ່າວຄຳຊຶ່ງຈະເປັນຂໍກະແຈ ຈະແນະນຳໃຫ້ທີມໄດ້ເວົ້າຄຳທີ່ຕ້ອງການນັ້ນອອກມາ: ຜູ້ມີອຳນາດ, ກຳລັງຝ່າຍວິນຍານ, ສັດຕູ, ອາວຸດ, ໄຊຊະນະ. ໃຫ້ຄຣູຊອກຫາຄຳເວົ້າທີ່ເປັນຂໍກະແຈນັ້ນເອົາເອງ. ໃຫ້ທີມແຕ່ລະທີມເດົາເອົາເອງ ຖ້າຫາກຖືກກໍຫມາຍຄວາມວ່າໄດ້ຄະແນນນຶ່ງ. ເມື່ອຫມົດແລ້ວໃຫ້ສລຸບຄະແນນ ຫາກທີມໃດໄດ້ຄະແນນຫລາຍກວ່າກໍຫມາຍຄວາມວ່າ ທີມນັ້ນຊະນະ.

### <u>ນຳພາສຶກສາ:</u>

2. ໃຫ້ນັກຮຽນກັບຄືນນັ່ງບ່ອນເກົ່າ ຖ້າພໍເປັນໄປໄດ້ໃຫ້ນັ່ງ ເປັນຮູບເຄິ່ງວົງມົນ. ກ່າວຄືນ 5 ຄຳເວົ້າທີ່ຜ່ານມາ. ຊຶ່ງ 5 ຄຳນີ້ ອາດຈະໄດ້ຮຽນຮ່ວມກັນໃນວັນນີ້. ຄືໃນເອເຟໂຊ 6:10-20

3. ຂຽນລົງໃສ່ກະດານ ແຜນການຂອງພຣະເຈົ້າ ແລະຫນ້າທີ່ຮັບຜິດຊອບຂອງເຮົາ. ພຣະປະສົງຂອງພຣະເຈົ້າ ເອເຟໂຊ 1-3 ດຳເນີນຊີວິດນອກພຣະປະສົງຂອງພຣະເຈົ້າ ເອເຟໂຊ 4-6
   - ຈະຊອກຫາຕຳແຫນ່ງໃນຄຣິສຕະຈັກຢ່າງໃດ ເອເຟໂຊ 4:1-16
   - ຈະເດີນ ແລະຈະເວົ້າຢ່າງໃດ ເອເຟໂຊ 4:17-5:11
   - ຈະເປັນຄອບຄົວຄຣິສຕຽນຢ່າງໃດ ເອເຟໂຊ 5:21--6:4

ຈະເປັນຄຣິສຕຽນຢ່າງໃດ ໃນເມື່ອບໍ່ແມ່ນຂອງງ່າຍ ເອເຟໂຊ 6:10-20

4. ອະທິບາຍ 6:10 ໂປໂລໄດ້ຮຽກຮ້ອງໃຫ້ຜູ້ທີ່ເຊື່ອທັງຫລາຍ ໃຫ້ເພີ້ມກຳລັງຂຶ້ນໂດຍຣິດເດດຂອງພຣະເຈົ້າ ທີ່ຄຣິສຕະຈັກເມືອງເອເຟໂຊ. ຄຣູຖາມ: ແລະຄຣິສຕຽນທຸກວັນນີ້ເດ ເປັນແນວໃດ ຄວນຈະເພີ້ມກຳລັງຫລືບໍ່? ລໍຖ້າໃຫ້ນັກຮຽນຕອບຈັກສອງ ສາມຄົນ.

5. ຖາມ: ເປັນຫຍັງຈຶ່ງເພີ້ມຂຶ້ນ? ໃຜເປັນສັດຕູຂອງຜູ້ທີ່ເຊື່ອ? ໃຫ້ຄົນນຶ່ງອ່ານ 6: 11-12

6. ໃຫ້ນັກຮຽນ ອ່ານ 6: 13-20 ໃຫ້ນັກຮຽນຕັ້ງໃຈຟັງ ແລະຂຽນຊື່ອາວຸດລົງໄປ ຫລືຈະຂຽນລົງໃນກະດານກໍໄດ້.

7. ຂໍ້ 18-20 ເປັນການຕັກເຕືອນໃຫ້ອ້ອນວອນອະທິຖານ ຄຣູຄວນເຕືອນນັກຮຽນວ່າອາວຸດແຕ່ລະຊະນິດທີ່ຈະນຳມາໃຊ້, ແລະໄດ້ຜົນດີນັ້ນກໍຕ້ອງມີການອະທິຖານປະກອບດ້ວຍ.

<u>ຫນູນໃຈນັກຮຽນ:</u>

8. ຫລັງຈາກສອນສິ້ນສຸດແລ້ວ ໃຫ້ຖາມນັກຮຽນເຖິງອາວຸດວ່າ ປັດຈຸບັນນີ້ ພວກເຮົາມີອາວຸດບໍ່ ຫລືວ່າຍັງຢູ່ໃນຕູ້. ຫລືວ່າຫລົງບ່ອນໄວ້. ຫລືວ່າເຂົ້າຂີ້ຫມ້ຽງຫມົດແລ້ວ.

9. ປັດຈຸບັນທ່ານໃຊ້ອາວຸດຊະນິດໃດຫລາຍຫວ່າຫມູ່? ເປັນຫຍັງຈຶ່ງໃຊ້ຫລາຍກວ່າຫມູ່? ຖາມຈັກສອງສາມຄົນ

10. ອະທິຖານຂໍພຣະເຈົ້າຊົງນຳໃຫ້ຮູ້ຈັກໃຊ້ອາວຸດ ແລະຕຽມຕົວເຂົ້າສູ່ການນະມັສການ.